ຄູ່ມື

ລາງວັນການທ່ອງທ່ຽວແບບຍືນຍົງ

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ຄູ່ມື

ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ

ສາລະບານ

I. ບົດຂັດຫຍໍ້....1
I. ບົດຂັດຫຍໍ້....1
II. ຫລັກການ ແລະ ເຫດຜົນ....2
III. ວິທີຈັດຕັ້ງປະຕິບັດ....4
1. ຫລັກການທົ່ວໄປ....4
2. ມາດຖານທົ່ວໄປສຳລັບຜູ້ສະໝັກ....7
3. ຮູບແບບການແຂ່ງຂັນທີ່ກຳນົດໄວ້....8
4. ການດຳເນີນງານດ້ານການບໍລິຫານ....10
IV. ການກຳນົດມາດຖານໃນການຄັດເລືອກ....12
1. ບົດຄັດຫຍໍ້....12
2. ການຕັ້ງກົດລະບຽບສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ....13
V. ແບບຟອມສະໝັກລາງວັນການທ່ອງທ່ຽວອາຊຽນ....17
1. ລາຍລະອຽດຂອງຜະລິດຕະພັນ....18
2. ພາບລວມຂອງທີມຜູ້ສະໝັກ....21
VI. ແບບຟອມສຳລັບປະເມີນຕົນເອງ ແລະ ຂອງຄະນະກຳມະການລົງປະເມີນຄືນ....23
1. ການກວດສອບທາງດ້ານບໍລິການ ແລະ ວິຊາການ (ສຳລັບຄະນະກຳມະການຂັ້ນແຂວງ ແລະ ສູນກາງ) “ໄດ້ຕາມມາດຕະຖານ” / ການຄັດເລືອກຜະລິດຕະພັນ....23
2. ແບບຟອມສຳລັບປະເມີນຕົນເອງ ແລະ ຂອງຄະນະກຳມະການລົງປະເມີນຄືນ....24
3. ແບບຟອມສຳລັບປະເມີນເອົາຄະແນນເພີ່ມ ເພື່ອເລືອກເອົາຜູ້ຊະນະ (ກໍລະນີໄດ້ຄະແນນເທົ່າກັນ)....43
4. ຕາຕະລາງສະຫລຸບຄະແນນຂອງຜະລິດຕະພັນແຕ່ລະປະເພດ....45
VII. ການຮັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ....46
1. ໂລ້ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ....47
2. ໃບຢັ້ງຢືນສຳລັບຜະລິດຕະພັນຍືນຍົງອາຊຽນ (ຢູ່ຊົນນະບົດ)....48
3. ໃບຢັ້ງຢືນສຳລັບຜະລິດຕະພັນຍືນຍົງອາຊຽນ (ຢູ່ໃນຕົວເມືອງ)....48
ເອກະສານຊ້ອນທ້າຍ....49

ນິຍາມຄຳສັບສະເພາະ

ຄຳສັບທີ່ໃຊ້ໃນ "ການທ່ອງທ່ຽວແບບຍືນຍົງ" ສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ.

- ✓ **ກິດຈະກຳທາງເສດຖະກິດ:** ສຳລັບຈຸດປະສົງຂອງລາງວັນ, "ກິດຈະກຳທາງເສດຖະກິດ" ໝາຍເຖິງກິດຈະກຳກ່ຽວຂ້ອງກັບການຂາຍຜະລິດຕະພັນ ຫລື ການບໍລິການທີ່ກ່ຽວຂ້ອງກັບການທ່ອງທ່ຽວ (ປີ້ຍົນ, ການທ່ອງທ່ຽວ, ຫ້ອງນອນ, ອາຫານ, ເຄື່ອງທີ່ລະນຶກ ແລະ ອື່ນໆ).

- ✓ **ພາກທຸລະກິດ:** ສຳລັບຈຸດປະສົງຂອງລາງວັນ, "ພາກທຸລະກິດ" ໝາຍເຖິງອົງກອນຕ່າງໆທີ່ບໍ່ແມ່ນ "ພາກລັດ" (ວິສາຫະກິດ, ສະມາຄົມ, ມະຫາວິທະຍາໄລ ແລະ ພາກສ່ວນອື່ນໆ)

- ✓ **ພາກລັດ:** ສຳລັບຈຸດປະສົງຂອງລາງວັນ, "ພາກລັດ" ໝາຍເຖິງອົງກອນຕ່າງໆ ທີ່ເປັນ "ອົງການຈັດຕັ້ງລັດ". ລາຍຊື່ອົງການຈັດຕັ້ງລັດ ປະກອບມີ: ນະຄອນ, ເມືອງ, ກະຊວງ ແລະ ອື່ນໆ.

- ✓ **ຜົນປະໂຫຍດທາງກົງ:** ສຳລັບຈຸດປະສົງຂອງລາງວັນ, "ຜົນປະໂຫຍດທາງກົງ" ໝາຍເຖິງ ຜົນປະໂຫຍດທີ່ໄດ້ຈາກກິດຈະກຳທາງເສດຖະກິດ ເຊັ່ນ: ເງິນ, ການຈ້າງງານ, ຄວາມສະອາດ, ການກໍ່ສ້າງ, ຈຳນວນນັກທ່ອງທ່ຽວ, ຄວາມເພິ່ງພໍໃຈ ແລະ ອື່ນໆ.

- ✓ **ຜົນປະໂຫຍດທາງອ້ອມ:** ສຳລັບຈຸດປະສົງຂອງລາງວັນ, "ຜົນປະໂຫຍດທາງອ້ອມ" ໝາຍເຖິງ ຜົນປະໂຫຍດທີ່ໄດ້ຈາກກິດຈະກຳເສດຖະກິດ ເຊັ່ນ: ການສຶກສາ, ຄຸນະພາບຊີວິດ, ການລົງທຶນຈາກຕ່າງປະເທດ ແລະ ອື່ນໆ.

- ✓ **ມໍລະດົກທາງວັດທະນະທຳ:** ສຳລັບຈຸດປະສົງຂອງລາງວັນ, "ມໍລະດົກທາງວັດທະນະທຳ" ໝາຍເຖິງ ທັດສະນີຍະພາບ, ອຸປະກອນ, ຜະລິດຕະພັນ ຫລື ການບໍລິການທີ່ກ່ຽວຂ້ອງກັບປະຫວັດສາດ ຫລື ປະເພນີ.

- ✓ **ມໍລະດົກທາງທຳມະຊາດ:** ສຳລັບຈຸດປະສົງຂອງລາງວັນ, "ມໍລະດົກທາງທຳມະຊາດ" ໝາຍເຖິງ ທັດສະນີຍະພາບ, ອຸປະກອນ, ຜະລິດຕະພັນ ຫລື ການບໍລິການ ທີ່ກ່ຽວຂ້ອງກັບທຳມະຊາດ.

- ✓ **ສະຖານທີ່ພັກແຮມ:** ສຳລັບຈຸດປະສົງຂອງລາງວັນ, "ສະຖານທີ່ພັກແຮມ" ໝາຍເຖິງ ສິ່ງຮອງຮັບໃນການລັບນອນທີ່ສະໜອງໃຫ້ແກ່ນັກທ່ອງທ່ຽວ ລວມມີ ໂຮງແຮມ ແລະ ເຮືອນພັກແຮມນຳບ້ານປະຊາຊົນ ດັ່ງທີ່ໄດ້ລະບຸໄວ້ຢູ່ໃນມາດຕະຖານການທ່ອງທ່ຽວອາຊຽນ:

- ✓ **ການບໍລິການອາຫານ ແລະ ເຄື່ອງດື່ມທ້ອງຖິ່ນ:** ສຳລັບຈຸດປະສົງຂອງລາງວັນ, ນິຍາມຂອງມາດຕະຖານການທ່ອງທ່ຽວອາຊຽນ ທີ່ຈະນຳໃຊ້ຄື: "ການບໍລິການອາຫານ ແລະ ເຄື່ອງດື່ມທ້ອງຖິ່ນ ແມ່ນຮູບແບບການບໍລິການອາຫານ ແລະ ເຄື່ອງດື່ມ ແບບດັ່ງເດີມ ແລະ ແບບທົ່ວໄປ ທີ່ຜະລິດ ແລະ/ຫຼື ຂາຍ ໂດຍປະຊາຊົນທ້ອງຖິ່ນຕາມຮ້ານອາຫານທ້ອງຖິ່ນ ຫລື ຮ້ານຄ້າອື່ນໆ ທີ່ຄ້າຍຄືກັນ."

- ✓ **ຫ້ອງນ້ຳສາທາລະນະ:** ສຳລັບຈຸດປະສົງຂອງລາງວັນ, ມາດຕະຖານການທ່ອງທ່ຽວ "ມາດຕະຖານຫ້ອງນ້ຳສາທາລະນະອາຊຽນ".

- ✓ **ໂຮງແຮມຂຽວ:** ສຳລັບຈຸດປະສົງຂອງລາງວັນ, ມາດຕະຖານການທ່ອງທ່ຽວ “ມາດຕະຖານໂຮງແຮມຂຽວອາຊຽນ”.

- ✓ **ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ:** ສຳລັບຈຸດປະສົງຂອງລາງວັນ, ມາດຕະຖານການທ່ອງທ່ຽວ “ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ”.

- ✓ **ເຮືອນພັກແຮມປະຊາຊົນ:** ສຳລັບຈຸດປະສົງຂອງລາງວັນ, ມາດຕະຖານການທ່ອງທ່ຽວ “ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ”.

- ✓ **ພະນັກງານນຳທ່ຽວຂັ້ນບ້ານ ຫລື ສະເພາະພື້ນທີ່:** ຄົນທ້ອງຖິ່ນຜູ້ທີ່ພານັກທ່ອງທ່ຽວໄປທ່ຽວຊົມ ແລະ ອະທິບາຍເປັນພາສາທ້ອງຖິ່ນ ແລະ ອາດມີການຊ່ວຍເຫລືອຈາກພະນັກງານນຳທ່ຽວລະດັບຊາດຖ້າຈຳເປັນ ແລະ ອະທິບາຍຂໍ້ມູນມໍລະດົກທາງວັດທະນະທຳ ແລະ ທຳມະຊາດຂອງຂົງເຂດໃດໜຶ່ງ ຊຶ່ງບຸກຄົນດັ່ງກ່າວມີຄວາມຊຳນານສະເພາະພື້ນທີ່ໃດໜຶ່ງ ຊຶ່ງຕາມປົກກະຕິແລ້ວແມ່ນບຸກຄົນທີ່ໄດ້ຮັບອະນຸມັດຈາກຊຸມຊົນ ຫຼື ອຳນາດການປົກຄອງທ້ອງຖິ່ນນັ້ນ.

ບັນຊີຫົວຂໍ້ຫລັກສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ

- ການທ່ອງທ່ຽວ ແລະ ການຟື້ນຟູພື້ນທີ່ທາງກາຍະພາບ ນ້ຳ ແລະ ການທ່ອງທ່ຽວ
- ການທ່ອງທ່ຽວ ແລະ ເຂດປ່າສະຫງວນ
- ການທ່ອງທ່ຽວ ແລະ ມໍລະດົກທາງວັດທະນະທຳທີ່ເປັນນາມມະທຳ
- ການປຸງແຕ່ງອາຫານ ແລະ ຜະລິດຕະພັນທ້ອງຖິ່ນ
- ສິລະປະ ແລະ ການທ່ອງທ່ຽວ
- ສະຖາປັດ ແລະ ການທ່ອງທ່ຽວ
- ເຄື່ອງຫັດຖະກຳ ແລະ ການທ່ອງທ່ຽວ
- ການທ່ອງທ່ຽວທາງວັດທະນະທຳ
- ວັນນະຄະດີ ແລະ ການທ່ອງທ່ຽວ
- ການທ່ອງທ່ຽວແບບຜະຈົນໄພ
- ການທ່ອງທ່ຽວທາງກິລາ
- ການທ່ອງທ່ຽວເບິ່ງສັດ
- ການທ່ອງທ່ຽວເພື່ອສຸຂະພາບ
- ການທ່ອງທ່ຽວທາງສາດສະໜາ

I. ບົດຂັດຫຍໍ້

ໃນເດືອນມັງກອນ 2016, ບັນດາລັດຖະມົນຕີທ່ອງທ່ຽວອາຊຽນ10 ປະເທດ ໄດ້ຈັດຕັ້ງປະຕິບັດແຜນຍຸດທະສາດ ການທ່ອງທ່ຽວອາຊຽນ 2016-2025 ຮ່ວມກັນ ຢູ່ໃນງານມະຫາກຳທ່ອງທ່ຽວອາຊຽນ ຄັ້ງທີ 35 ທີ່ນະຄອນຫລວງມະນີ ລາ, ປະເທດຟີລິບປິນ. ວິໄສທັດຂອງແຜນຍຸດທະສາດການທ່ອງທ່ຽວອາຊຽນ ຮອດປີ 2025, ອາຊຽນຈະກາຍເປັນຈຸດ ໝາຍປາຍທາງການທ່ອງທ່ຽວທີ່ມີຄຸນນະພາບ, ມີເອກະລັກສະເພາະ, ມີຄວາມຫລາກຫລາຍ ແລະ ຈະເນັ້ນໃສ່ການພັດທະ ນາການທ່ອງທ່ຽວແບບມີຄວາມຮັບຜິດຊອບ, ມີຄວາມຍືນຍົງ, ມີສ່ວນຮ່ວມ ແລະ ເທົ່າທຽມກັນ ເພື່ອເປັນການປະກອບ ສ່ວນອັນສຳຄັນໃຫ້ແກ່ຄວາມຜາສຸກດ້ານເສດຖະກິດ-ສັງຄົມຂອງອາຊຽນ" [1]

ເພື່ອອຳນວຍຄວາມສະດວກ ແລະ ເລັ່ງລັດໃຫ້ບັນລຸແຜນຍຸດທະສາດການທ່ອງທ່ຽວອາຊຽນ **(2016-2025),** ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຫ່ງ ສປປ ລາວ ໄດ້ກຳນົດເອົາ 2 ວຽກບູລິມະສິດ ເຊັ່ນ: 1. ຖະ ແຫລງການປາກເຊ່ຈ່າດ້ວຍແຜນຍຸດທະສາດເພື່ອການພັດທະນາການທ່ອງທ່ຽວແບບອະນຸລັກອາຊຽນ ແລະ 2. ລາງວັນ ການທ່ອງທ່ຽວແບບຍືນຍົງອາຊຽນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດໃນໄລຍະທີ່ ສປປ ລາວ ເປັນປະທານອາຊຽນ ໃນປີ 2016.

ເພື່ອໃຫ້ໄດ້ແນວຄິດທີ່ຊັດເຈນກ່ຽວກັບການເຮັດໃຫ້ລາງວັນການທ່ອງທ່ຽວ ແບບຍືນຍົງອາຊຽນໃຫ້ເປັນຮູບປະ ທຳ, ເອກະສານນີ້ສະແດງໃຫ້ເຫັນວ່າ ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ມີຈຸດປະສົງໃນການສ້າງແຮງຈູງໃຈໃຫ້ ແກ່ຈຸດໝາຍປາຍທາງການທ່ອງທ່ຽວອາຊຽນ ແລະ ພາກສ່ວນທີ່ກ່ຽວຂ້ອງ (i) ເພື່ອຮ່ວມກັນພັດທະນາການທ່ອງທ່ຽວ ແລະ (ii) ເພື່ອຫລຸດຜ່ອນບັນຫາດ້ານສິ່ງແວດລ້ອມ, ວັດທະນະທຳ-ສັງຄົມ ແລະ ເສດຖະກິດ ທີ່ເກີດຈາກການຂະຫຍາຍຕົວ ຂອງການທ່ອງທ່ຽວຢ່າງວ່ອງໄວ ຂະນະດຽວກັນກໍໃຫ້ຄຳແນະນຳ ແລະ ແຮງຈູງໃຈທີ່ເປັນປະໂຫຍດໃຫ້ແກ່ພາກລັດ ແລະ ພາກທຸລະກິດ ເພື່ອປັບປຸງຜະລິດຕະພັນ ແລະ ການບໍລິການຂອງຕົນໃຫ້ໄດ້ຕາມກັບມາດຕະຖານທີ່ມີຢູ່:

i. *ການອຳນວຍຄວາມສະດວກໃນການນຳສະເໜີບັນດາມາດຕະຖານການທ່ອງທ່ຽວອາຊຽນໃຫ້ແກ່ພາກລັດ ແລະ ພາກທຸລະກິດ;*
ii. *ການອຳນວຍຄວາມສະດວກໃນການກະຈາຍຄວາມຫລາກຫລາຍຂອງການທ່ອງທ່ຽວໄປຫາແຫລ່ງທ່ອງທ່ຽວ ໃ ໝ່ ແລະ ມີຄົນຮູ້ຈັກໜ້ອຍ;*
iii. *ການສົ່ງເສີມການຕະຫລາດ ແລະ ຜະລິດຕະພັນການທ່ອງທ່ຽວແບບຍືນຍົງອາຊຽນຢູ່ຈຸດໝາຍປາຍທາງການທ່ອງ ທ່ຽວໃນເມືອງ ແລະ ຊຶນນະບົດ.*

ເອກະສານນີ້ໄດ້ຮວບຮວມຂັ້ນຕອນດ້ານວິຊາການ ແລະ ລະບຽບການບໍລິຫານ ເພື່ອດຳເນີນລາງວັນການທ່ອງທ່ຽວ ແບບຍືນຍົງອາຊຽນ ຊຶ່ງໄດ້ລວມມີລາຍລະອຽດຂອງມາດຕະຖານໃນການຄັດເລືອກ.

[1] ແຜນຍຸດທະສາການທ່ອງທ່ຽວອາຊຽນ 2016-2025, ໜ້າທີ 27.

II. ຫລັກການ ແລະ ເຫດຜົນ

ໃນຊ່ວງໄລຍະຫລາຍປີຜ່ານມາ, ການທ່ອງທ່ຽວມີບົດບາດສຳຄັນໃນການປະຕິຮູບເສດຖະກິດອາຊຽນ ຊຶ່ງຈຸດໝາຍປາຍທາງການທ່ອງທ່ຽວຕົ້ນຕໍໃນບັນດາປະເທດສະມາຊິກອາຊຽນໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວຢ່າງວ້ອງໄວຂອງວຽກງານການທ່ອງທ່ຽວ, ຊ່ອງຫວ່າງດ້ານເສດຖະກິດ-ສັງຄົມທີ່ສຳຄັນຍັງຄົງມີຢູ່ໃນບັນດາປະເທດອາຊຽນ ແລະ ສິ່ງທ້າທາຍທີ່ເພີ່ມຂຶ້ນຄືການປົກປັກຮັກສາມໍລະດົກທາງທຳມະຊາດ ແລະ ວັດທະນະທຳ.

ບັນດາປະເທດສະມາຊິກອາຊຽນມີການພັດທະນາທີ່ແຕກຕ່າງກັນທາງດ້ານຄຸນນະພາບຂອງການບໍລິການ, ການສ້າງຂີດຄວາມສາມາດ ແລະ ການພັດທະນາພື້ນຖານໂຄງລ່າງ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນໃນການກະຕຸກຊຸກຍູ້ໃຫ້ມີພົດຕິກຳທີ່ມີຄວາມຮັບຜິດຊອບລະຫວ່າງພາກສ່ວນຕ່າງໆ ເຊັ່ນ: ການຈັດຕັ້ງປະຕິບັດບັນດາມາດຕະຖານການທ່ອງທ່ຽວອາຊຽນ ແລະ ເພື່ອອຳນວຍຄວາມສະດວກໃນການກະຈາຍຄວາມຫລາກຫລາຍຂອງຂໍ້ສະເໜີການທ່ອງທ່ຽວ ທີ່ເນັ້ນໃສ່ຈຸດໝາຍປາຍທາງການທ່ອງທ່ຽວໃໝ່ ແລະ ປັບປຸງຜະລິດຕະພັນທີ່ມີຢູ່ແລ້ວນັ້ນໃຫ້ດີຂຶ້ນຕື່ມ.

ໃນການສົ່ງເສີມໂດຍຜ່ານການໃຫ້ລາງວັນ ແລະ ເຄື່ອງມືໂຄສະນາ, ການຈັດຕັ້ງປະຕິບັດບັນດາມາດຕະຖານການທ່ອງທ່ຽວອາຊຽນ ທັງພາກລັດ ແລະ ພາກທຸລະກິດ ເພື່ອຊ່ວຍຫລຸດຜ່ອນຊ່ອງຫວ່າງຢູ່ໃນປະເທດສະມາຊິກອາຊຽນຕ່າງໆ.

ຈຸດປະສົງຂອງລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ

ເພື່ອໃຫ້ສອດຄ່ອງກັບວິໄສທັດຂອງແຜນຍຸດທະສາດການທ່ອງທ່ຽວອາຊຽນ (2016-2025), ມີ 2 ຈຸດປະສົງຕົ້ນຕໍເພື່ອໃຫ້ບັນລຸຜົນສຳເລັດ:

- **ຈຸດປະສົງທີ 1:** ເພື່ອສົ່ງເສີມຂີດຄວາມສາມາດໃນການແຂ່ງຂັນຂອງອາຊຽນໃນຖານະເປັນຈຸດໝາຍປາຍທາງລະດັບສາກົນທີ່ສອດຄ່ອງກັນ ຊຶ່ງປະກອບມີຜະລິດຕະພັນແບບຍືນຍົງ ລວມທັງການສົ່ງເສີມການຕະຫລາດ ແລະ ການຂາຍ ເພື່ອນຳສະເໜີອາຊຽນໃຫ້ກາຍເປັນຈຸດໝາຍປາຍທາງໜຶ່ງດຽວ, ສ້າງປະສົບການການເດີນທາງ ແລະ ຈຸດໝາຍປາຍທາງອາຊຽນທີ່ມີເອກະລັກສະເພາະ. ສິ່ງສຳຄັນຄືຕ້ອງຕອບສະໜອງດ້ານພື້ນຖານໂຄງລ່າງໃຫ້ພຽງພໍ ຊຶ່ງກ່ຽວຂ້ອງກັບການຂະຫຍາຍການເຊື່ອມຕໍ່, ການຍົກລະດັບບັນດາມາດຕະຖານດ້ານສິ່ງອຳນວຍຄວາມສະດວກ ແລະ ການບໍລິການໃຫ້ແກ່ນັກທ່ອງທ່ຽວ ລວມທັງເພີ່ມຄວາມສະດວກໃນການເດີນທາງ, ຄວາມປອດໄພ ແລະ ຄວາມສະຫງົບ. ປັດໄຈຫລັກໃນການບັນລຸຈຸດປະສົງດັ່ງກ່າວນີ້ ກໍ່ເພື່ອດຶງດູດການລົງທຶນໃນຂະແໜງການທ່ອງທ່ຽວອາຊຽນໃຫ້ຫລາຍຂຶ້ນ.

- **ຈຸດປະສົງທີ 2:** ເພື່ອຮັບປະກັນໃຫ້ຂໍ້ສະເໜີການທ່ອງທ່ຽວອາຊຽນມີຄວາມຍືນຍົງ ຊຶ່ງສາມາດເຮັດໄດ້ໂດຍການສະໜັບສະໜູນຈາກຊຸມຊົນທ້ອງຖິ່ນ (ການທ່ອງທ່ຽວແບບມີສ່ວນຮ່ວມ) ແລະ ການມີສ່ວນຮ່ວມຈາກພາກລັດ ແລະ ພາກທຸລະກິດໃນເຄືອຂ່າຍການທ່ອງທ່ຽວ; ການປັບປຸງດ້ານຄວາມປອດໄພ ແລະ ຄວາມສະຫງົບ; ຈັດລຳດັບຄວາມສຳຄັນໃນການປົກປັກຮັກສາ ແລະ ບຳລຸງຮັກສາມໍລະດົກທາງທຳມະຊາດ ແລະ ວັດທະນະທຳ ແລະ ເພີ່ມ

ຄວາມຮັບຜິດຊອບຂອງການທ່ອງທ່ຽວອາຊຽນໃນການປົກປັກຮັກສາສິ່ງແວດລ້ອມ ແລະ ການຮັບມືກັບການປ່ຽນແປງດິນຟ້າອາກາດ.

ແຜນຍຸດທະສາດການທ່ອງທ່ຽວອາຊຽນ (2016-2025) ປະກອບມີ 10 ກິດຈະກຳດັ່ງລະບຸໄວ້ຢູ່ໃນຕາຕະລາງຂ້າງລຸ່ມນີ້. ຈຸດປະສົງໃນການກຳນົດເອົາລາງວັນການທ່ອງທ່ຽວອາຊຽນເປັນ 1 ໃນ 2 ປະເດັນສຳຄັນໃນຖານະທີ່ ສປປ ລາວ ເປັນປະທານອາຊຽນ ແມ່ນເພື່ອນຳສະເໜີເຄື່ອງມືທີ່ຊ່ວຍໃຫ້ບັນລຸແຜນຍຸດທະສາດອາຊຽນທັງທາງກົງ ແລະ ທາງອ້ອມ.

ກິດຈະກຳຍຸດທະສາດອາຊຽນ (2016-2025)	ຜົນກະທົບຈາກ ASTA
ການໂຄສະນາ ແລະ ການຕະຫລາດ	ທາງກົງ
ເຮັດໃຫ້ມີຜະລິດຕະພັນການທ່ອງທ່ຽວທີ່ຫລາກຫລາຍ	ທາງອ້ອມ
ດຶງດູດການລົງທຶນໃນຂະແໜງການທ່ອງທ່ຽວ	ທາງອ້ອມ
ຍົກສູງຄວາມສາມາດຂອງບຸກຄະລາກອນ	ທາງກົງ
ຈັດຕັ້ງປະຕິບັດ ແລະ ຂະຫຍາຍບັນດາມາດຕະຖານອາຊຽນທາງດ້ານສິ່ງອຳນວຍຄວາມສະດວກ, ການບໍລິການ ແລະ ຈຸດໝາຍປາຍທາງ.	ທາງກົງ
ຈັດຕັ້ງປະຕິບັດ ແລະ ຂະຫຍາຍການເຊື່ອມຕໍ່ ແລະ ພື້ນຖານໂຄງລ່າງຂອງຈຸດໝາຍປາຍທາງ.	ກໍ່ໃຫ້ເກີດ
ສິ່ງເສີມການອຳນວຍຄວາມສະດວກໃຫ້ແກ່ການເດີນທາງ	ກໍ່ໃຫ້ເກີດ
ຍົກລະດັບການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ, ພາກລັດ ແລະ ພາກທຸລະກິດ ໃນເຄືອຂ່າຍການທ່ອງທ່ຽວ	ທາງກົງ
ຮັບປະກັນດ້ານຄວາມປອດໄພ ແລະ ຄວາມສະຫງົບ, ຈັດລຽງຄວາມສຳຄັນໃນການປົກປັກຮັກສາ ແລະ ຄຸ້ມຄອງແຫລ່ງມໍລະດົກ	ທາງກົງ
ເພີ່ມຄວາມຮັບຜິດຊອບຕໍ່ການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ	ທາງກົງ

ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ຊ່ວຍໃຫ້ມີການດຳເນີນງານໄດ້ໂດຍກົງ ຢ່າງໜ້ອຍຫົກ (6) ໃນສິບ (10) ກິດຈະກຳຍຸດທະສາດອາຊຽນ ຊຶ່ງສະທ້ອນໃຫ້ເຫັນຈຸດປະສົງສະເພາະຂອງລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ແນໃສ່ເພື່ອຮ່ວມກັນ:

- ສິ່ງເສີມໃຫ້ນັກທ່ອງທ່ຽວໄປທ່ຽວຊົມຈຸດໝາຍປາຍທາງ ແລະ ຜະລິດຕະພັນທີ່ໄດ້ມາດຕະຖານຄວາມຍືນຍົງຂອງອາຊຽນ (ວິທີຈັດຕັ້ງປະຕິບັດທີ່ດີ);

- ປູກຈິດສຳນຶກກ່ຽວກັບຄວາມຫລາກຫລາຍ ແລະ ຄຸນນະພາບຂອງອາຊຽນ;
- ໂຄສະນາບັນດາປະເທດ ແລະ ພາກພື້ນອາຊຽນ;
- ຊ່ວຍຫລຸດຜ່ອນຄວາມແອອັດ, ການແຂ່ງຂັນສູງ, ເຮັດໃຫ້ການໄຫລວຽນຂອງນັກທ່ອງທ່ຽວຕ່ຳກັບຈຸດໝາຍປາຍທາງດຸນດ່ຽງກັນ;
- ໃຫ້ລາງວັນການທ່ອງທ່ຽວທີ່ມີຄວາມຍືນຍົງ;
- ສ້າງຮູບແບບການແລກປ່ຽນດ້ານການຈັດຕັ້ງປະຕິບັດທີ່ດີໃນລະດັບອາຊຽນ;
- ສົ່ງເສີມເຄືອຄ່າຍຜະລິດຕະພັນທີ່ໄດ້ຮັບລາງວັນທີ່ສາມາດຊັກຈູງຈຸດໝາຍປາຍທາງແຫ່ງອື່ນໆ ເພື່ອຮັບຮອງເອົາຮູບແບບການພັດທະນາການທ່ອງທ່ຽວແບບຍືນຍົງ;
- ກໍ່ໃຫ້ເກີດການຊ່ວຍເຫລືອຈາກບັນດາອົງການທ່ອງທ່ຽວແຫ່ງຊາດຢູ່ໃນລະດັບທ້ອງຖິ່ນ ແລະ ມີການລົງທຶນຢູ່ຕາມຈຸດໝາຍປາຍທາງຕ່າງໆຫລາຍຂຶ້ນ;
- ກໍ່ໃຫ້ເກີດຄວາມພາກພູມໃຈຂອງຊຸມຊົນທ້ອງຖິ່ນຂອງທີມຜູ້ສະໜັກທີ່ຈະນຳໄປສູ່ຄວາມກະຕືລືລົ້ນໃນການປັບປຸງການທ່ອງທ່ຽວແບບຍືນຍົງຕື່ມອີກ;
- ໃຫ້ລາງວັນແກ່ການປ່ຽນແປງໃໝ່ ແລະ ການມີສ່ວນຮ່ວມຕໍ່ສັງຄົມ ແລະ ສິ່ງແວດລ້ອມ;
- ເຮັດໃຫ້ມີການຈັດຕັ້ງປະຕິບັດກິດຈະກຳຍຸດທະສາດຫລາຍກິດຈະກຳຈາກ “ຂອບວຽກທົ່ວໄປຂອງແຜນຍຸດທະສາດການທ່ອງທຽວອາຊຽນ 2016-2025” ແລະ “ແຜນປະຕິບັດງານ 5 ປີ 2016-2020”.

III. ວິທີຈັດຕັ້ງປະຕິບັດ

“ຈຸດໝາຍປາຍທາງຈະມີຄວາມຍືນຍົງຖ້າພາກສ່ວນທີ່ກ່ຽວຂ້ອງກັບການທ່ອງທ່ຽວຕັດສິນໃຈປະຕິບັດວຽກງານຮ່ວມກັນແບບມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ, ສ້າງລາຍການ ແລະ ສະເໜີຜະລິດຕະພັນແບບຍືນຍົງ”

1. ຫລັກການທົ່ວໄປ

ຜ່ານເງື່ອນໄຂທີ່ດີ ແລະ ໜ້າສົນໃຈໃນການມີສ່ວນຮ່ວມຕາມລະບຽບກົດໝາຍຂອງປະເທດ, ລາງວັນການທ່ອງທ່ຽວອາຊຽນແມ່ນການແຂ່ງຂັນ ຊຶ່ງຈັດຂຶ້ນທຸກໆສອງປີ ເພື່ອສົ່ງເສີມຄຸນຄ່າປະສົບການທ່ອງທ່ຽວອາຊຽນຂອງນັກທ່ອງທ່ຽວສາກົນ, ພາກພື້ນ ຫລື ພາຍໃນ. ເພື່ອເລັ່ງລັດການເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍບັນດາມາດຕະຖານການທ່ອງທ່ຽວອາຊຽນທີ່ມີຢູ່ນັ້ນ,ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນໄດ້ເນັ້ນໃສ່ຈຸດໝາຍປາຍທາງໃນຕົວເມືອງ ແລະ ຊົນນະບົດໃນພາກພື້ນອາຊຽນ ແລະ ພາກສ່ວນທີ່ກ່ຽວຂ້ອງສາມາດປົກປັກຮັກສາ, ເອົາໃຈໃສ່ ແລະ ສົ່ງເສີມສິ່ງແວດລ້ອມໃນທ້ອງຖິ່ນ ແລະ ຊຸມຊົນ. ສິ່ງນີ້ສາມາດບັນລຸໄດ້ກໍ່ຍ້ອນຄວາມສາມາດຂອງພາກລັດ ແລະ ພາກທຸລະກິດ ແລະ ປະຕິບັດຕາມກອບການຮ່ວມມືທີ່ດີຈາກພາກສ່ວນເຫລົ່ານີ້ ໂດຍຄຳນຶງເຖິງຄວາມຈຳເປັນໃນການເພີ່ມທະວີການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນໃນການພັດທະນາການທ່ອງທ່ຽວ. ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນມີຈຸດປະສົງ ເພື່ອກະຕຸກຊຸກຍູ້ພາກລັດ ແລະ ພາກທຸລະກິດຢູ່ຕາມຈຸດໝາຍປາຍທາງໃນພາກພື້ນອາຊຽນ ເພື່ອຮ່ວມກັນສະເໜີ ແລະ ຈັດຕັ້ງປະຕິບັດສ້າງຜະລິດຕະພັນການທ່ອງທ່ຽວແບບຍືນຍົງ. ການເຮັດແບບນີ້ໄດ້ກໍ່ຍ້ອນມີການຮ່ວມມືທີ່ດີທີ່ສະແດງໃຫ້ເຫັນເຖິງຄວາມສາ

ມາດຂອງພາກສ່ວນຕ່າງໆ ເພື່ອອຳນວຍຄວາມສະດວກໃນການປ່ຽນຈຸດໝາຍປາຍທາງໂດຍຜ່ານຄວາມຍືນຍົງ.

ຮູບພາບທີ 1: ຫລັກການແຂ່ງຂັນທົ່ວໄປກ່ຽວກັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ



ເຖິງແນວໃດກໍ່ຕາມ, ບັນດາປະເທດສະມາຊິກອາຊຽນມີການພັດທະນາທີ່ແຕກຕ່າງກັນທາງດ້ານຄຸນນະພາບຂອງ ການບໍລິການ, ຂີດຄວາມສາມາດ ແລະ ພື້ນຖານໂຄງລ່າງ. ນອກຈາກນັ້ນ, ຍັງມີຄວາມຫລາກຫລາຍທາງດ້ານພູມມີສາດ, ການສ້າງເປັນຕົວເມືອງ, ການອອກກົດໝາຍ ແລະ ອື່ນໆ ໄດ້ຮຽກຮ້ອງໃຫ້ມີເງື່ອນໄຂຫລາຍຢ່າງທີ່ຕ້ອງໄດ້ນຳມາພິຈາລະ ນາ: ຊຶ່ງຊ່ວຍໃຫ້ (i) ປົກຄຸ້ມຂອບເຂດຈຸດໝາຍປາຍທາງການທ່ອງທ່ຽວອາຊຽນໄດ້ກ້ວາງຂຶ້ນ, (ii) ມີຜູ້ສະໝັກຈາກແຕ່ ລະປະເທດສະມາຊິກຢ່າງໜ້ອຍມີໜຶ່ງໃນສອງປະເພດເຫລົ່ານີ້.

- ✓ ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນມີ 2 ປະເພດຄື:
  1. ລາງວັນຜະລິດຕະພັນການທ່ອງທ່ຽວແບບຍືນຍົງອາຊຽນຢູ່ຊົນນະບົດ
  2. ລາງວັນຜະລິດພັນການທ່ອງທ່ຽວແບບຍືນຍົງອາຊຽນ ຢູ່ໃນຕົວເມືອງ

ຮູບພາບທີ 2: ນິຍາມຂອງຜະລິດຕະພັນຊົມນະບົດ ແລະ ໃນເມືອງແບບຍືນຍົງ



⇨ ຜະລິດຕະພັນຊົມນະບົດ

ຜະລິດຕະພັນການທ່ອງທ່ຽວຊົມນະບົດແມ່ນຕັ້ງຢູ່ເຂດຊົມນະບົດ, ຊຶ່ງເປັນພື້ນທີ່ຫວ່າງທີ່ມີເຮືອນ ຫລື ສິ່ງປຸງສ້າງໜ້ອຍ ແລະ ບໍ່ມີຄົນຫລາຍ. ຄວາມໜາແໜ້ນຂອງປະຊາກອນໃນເຂດຊົມນະບົດກໍ່ບໍ່ຫລາຍ ແລະ ເປັນພື້ນທີ່ທາງພູມມີສາດທີ່ຕັ້ງຢູ່ນອກເມືອງ. ການທ່ອງທ່ຽວທາງຊົມນະບົດເນັ້ນໃສ່ການມີສ່ວນຮ່ວມຢ່າງຈິງຈັງຕາມວິຖີຊີວິດໃນຊົມນະບົດຫລາຍກ່ວາການໄປຢ້ຽມຢາມເຂດທີ່ບໍ່ແມ່ນຕົວເມືອງເທົ່ານັ້ນ. ຈຸດໝາຍປາຍທາງການທ່ອງທ່ຽວຊົມນະບົດປະກອບມີ: ການທ່ອງທ່ຽວຕາມທີ່ງນາ ຫລື ສວນ ແຕ່ຍັງລວມເຖິງການທ່ອງທ່ຽວທາງທຳມະຊາດ ແລະ ການທ່ອງທ່ຽວແບບອະນຸລັກແບບພິເສດ, ການຍ່າງ, ປີນພູ ແລະ ຂີ່ມ້າຂີ່ລົດຖີບຕ່າງໆ, ການພະຈົນໄພ, ກິລາ, ການທ່ອງທ່ຽວເພື່ອສຸຂະພາບ, ລ່າສັດ ແລະ ຊິດເບັດ, ການເດີນທາງເພື່ອການສຶກສາ, ສິລະປະ, ການທ່ອງທ່ຽວທາງມໍລະດົກຢູ່ໃນບາງຂົງເຂດ ແລະ ການທ່ອງທ່ຽວທາງຊົນເຜົ່າ.

ເຂດຊົມນະບົດ	ເຂດໃນຕົວເມືອງ
• ເຂດຢູ່ນອກຕົວເມືອງ;ຫ່າງຈາກທີ່ພັກອາໃສທີ່ມີປະຊາກອນຫລາຍກ່ວາ 10,000 ຄົນ ຊຶ່ງເປັນເຂດທີ່ມີທີ່ພັກອາໃສໜ້ອຍ ແລະ ປະຊາກອນໜ້ອຍ; • ມີທົ່ງນາ, ສວນ ແລະ ພື້ນທີ່ຫວ່າງກາງແຈ້ງ; • ໂດຍສ່ວນໃຫຍ່ແມ່ນການສະໜອງດ້ານເຮືອນພັກ ແຮມນຳປະຊາຊົນ ແລະ ເຮືອນພັກ (ແບບມີຫ້ອງນອນ ແລະ ອາຫານເຊົ້າ) (B&B) ໃຫ້ແກ່ນັກທ່ອງທ່ຽວ.	• ຕັ້ງຢູ່ໃກ້ກັບສະຖານີຂົນສົ່ງສາທາລະນະ; • ມີທີ່ພັກອາໃສ ແລະ ປະຊາກອນໜາແໜ້ນ ແລະ ມີພື້ນຖານໂຄງລ່າງທີ່ເປັນມິດກັບສິ່ງແວດລ້ອມ; • ຕັ້ງຢູ່ໃກ້ກັບສະໜາມບິນ; • ມີໂຮງແຮມຫລາຍກ່ວາ 5 ແຫ່ງ; • ຜະລິດຕະພັນ ຫລື ກິດຈະກຳຫລັກຕ້ອງຫ່າງຈາກເຂດທີ່ພັກອາໃສບໍ່ເກີນ 01 ຊົ່ວໂມງ ຈາກການເດີນທາງທາງລົດ.

⇨ ຜະລິດຕະພັນໃນຕົວເມືອງ

ຜະລິດຕະພັນທ່ອງທ່ຽວໃນເມືອງ ແມ່ນຕັ້ງຢູ່ເຂດຕົວເມືອງ ມີປະຊາກອນໜາແໜ້ນ ແລະ ມີສິ່ງປຸກສ້າງຫລາກຫລາຍຖ້າປຽບທຽບໃສ່ເຂດອ້ອມຂ້າງ. ທີມຜູ້ສະໜັກທີ່ນຳສະເໜີຜະລິດຕະພັນນັ້ນຕ້ອງຕັ້ງຢູ່ເມືອງ ຫລື ເຂດໃດໜຶ່ງທີ່ເປັນສ່ວນໜຶ່ງຂອງການບໍລິໂພກໃຊ້ສອຍທີ່ກະຈັດກະຈາຍຢູ່ພາຍໃນເມືອງນັ້ນ (ລາຍລະອຽດໄດ້ລະບຸໄວ້ຢູ່ໃນລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ທີ່ກຳນົດເອົາຈຸດໝາຍປາຍທາງການທ່ອງທ່ຽວໃນຕົວເມືອງ ແລະ ຊົນນະບົດ) ເຊັ່ນ: ເຂດບັນເທີງ ຫລື ວັດທະນະທຳ ທີ່ມີເຄື່ອງໝາຍ, ພາສາສະເພາະ ແລະ ຮູບພາບຕ່າງໆ ເພື່ອເຮັດໃຫ້ເຫັນຄວາມແຕກຕ່າງຂອງສະຖານທີ່. ເມືອງ, ຂົງເຂດເຫລົ່ານີ້ (ພາກສ່ວນໜຶ່ງຂອງເມືອງໃຫຍ່) ຫລື ເມືອງນ້ອຍ ຊຶ່ງລ້ອມແລ້ວແຕ່ມາຈາກເຂດອ້ອມຂ້າງທີ່ສາມາດສຳຫລວດໄດ້.

- ✓ ມີຜູ້ໄດ້ຮັບລາງວັນປະເພດລະ 1 ລາງວັນ: ປະເທດທີ່ປົກຄຸ້ມໄປດ້ວຍພື້ນທີ່ທາງພູມມີສາດ ສາມາດສະເໜີຜູ້ສະໝັກຈາກບ່ອນໃໝ່ໃນທຸກໆສອງປີ (ຜະລິດຕະພັນທີ່ບໍ່ໄດ້ຄັດເລືອກສາມາດສົ່ງໃບສະໝັກທຸກຄັ້ງທີ່ມີການແຂ່ງຂັນ ເພື່ອຮັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນທີ່ສະແດງໃຫ້ເຫັນເຖິງຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາມາດຕະຖານການທ່ອງທ່ຽວອາຊຽນ);
- ✓ ຜູ້ໄດ້ຮັບລາງວັນຈຳນວນ 20 ລາງວັນ ຈະໄດ້ອອກສື່ໄປທົ່ວໂລກຢູ່ທີ່ງານມະຫາກຳທ່ອງທ່ຽວອາຊຽນ ແລະ ໂຄສະນາຢູ່ເວັບໄຊອາຊຽນ www.aseantourism.travel ແລະ ເວັບໄຊກະຊວງການທ່ອງທ່ຽວຂອງແຕ່ລະປະເທດ. ເມື່ອສຳເລັດການແຂ່ງຂັນແຕ່ລະຄັ້ງແລ້ວ, ຈະມີການມອບໃບຢັ້ງຢືນດີເດັ່ນ ທີ່ມີໄລຍະເວລາ 2 ປີ ຊຶ່ງຈະໄດ້ມອບໃຫ້ຜູ້ໄດ້ຮັບລາງວັນລະດັບຊາດທັງໝົດ ແລະ ຈະມີການໂຄສະນາພື້ນທີ່ພິເສດຢູ່ໃນປະເທດສະມາຊິກອາຊຽນເຫລົ່ານີ້ຢູ່ຕ່າງປະເທດຕື່ມອີກ.

2. ມາດຕະຖານທົ່ວໄປສຳລັບຜູ້ສະໝັກ

- ທີມຜູ້ສະມັກແຕ່ລະທີມປະກອບມີພາກລັດ ແລະ ພາກທຸລະກິດ ທີ່ຮ່ວມກັນສະເໜີຜະລິດຕະພັນການທ່ອງທ່ຽວແບບຍືນຍົງ ຕາມຫົວຂໍ້ທີ່ກຳນົດໄວ້, ຖ້າທີມໃດທີ່ສາມາດປະຕິບັດການທ່ອງທ່ຽວແບບມີຄວາມຮັບຜິດຊອບໄດ້ດີກວ່າ ກໍມີໂອກາດໄດ້ຮັບລາງວັນຫລາຍກ່ວາ;
- ຜູ້ສະໝັກຕ້ອງມີຄວາມພ້ອມ ແລະ ເຊັນສັນຍາຫລາຍຝ່າຍຮ່ວມກັນ;
- ທີມຜູ້ສະໝັກຕ້ອງສະເໜີຜະລິດຕະພັນການທ່ອງທ່ຽວແບບມີຄວາມຮັບຜິດຊອບທີ່ມີຢູ່ແລ້ວ ແລະ ໃຫ້ ການບໍລິການຢ່າງໜ້ອຍ 1 ປີ (ຜະລິຕະພັນທີ່ສະເໜີ ອີງໃສ່ຫົວຂໍ້ການແຂ່ງຂັນຂອງປີນັ້ນໆ), ຜະລິດຕະພັນທີ່ສະເໜີຕ້ອງລວມມີພາກສ່ວນຕ່າງໆດັ່ງນີ້:
  1. ມີຫ້ອງນ້ຳສາທາລະສະອາດອາຊຽນ ຢ່າງໜ້ອຍ 1 ແຫ່ງ
  2. ມີສະຖານທີ່ພັກແຮມ (ໂຮງແຮມຂຽວອາຊຽນ ຫຼື ເຮືອນພັກແຮມປະຊາຊົນອາຊຽນ) ຢ່າງໜ້ອຍ 1 ແຫ່ງ
  3. ມີຮ້ານອາຫານ ແລະ ເຄື່ອງທີ່ສະອາດປອດໄພໄດ້ມາດຕະຖານ ຢ່າງໜ້ອຍ 1 ແຫ່ງ

4. ມີພະນັກງານນຳທ່ຽວສະເພາະພື້ນທີ່ (ລະດັບແຂວງ ຫຼື ລະດັບຊາດ) ຫຼື ບໍລິສັດທ່ອງທ່ຽວ/ຕົວແທນຈຳໜ່າຍການທ່ອງທ່ຽວ ຢ່າງໜ້ອຍ 1 ຄົນ/ແຫ່ງ
5. ການມີສ່ວນຮ່ວມຂອງຊຸມຊົນກ່ຽວກັບຜະລິດຕະພັນ ແລະ ກິດຈະກຳຕ່າງໆ ຢ່າງໜ້ອຍ 1 ຊຸມຊົນທີ່ໄດ້ຮັບການຄຸ້ມຄອງ ແລະ ສົ່ງເສີມຈາກພາກລັດ ແລະ ພາກທຸລະກິດຢ່າງໜ້ອຍຈາກໜຶ່ງພາກສ່ວນ, ສ້າງຜົນປະໂຫຍດທາງກົງ[2] ແລະ ທາງອ້ອມໃຫ້ແກ່ປະຊາຊົນທ້ອງຖິ່ນ, ສົ່ງເສີມມໍລະດົກທາງວັດທະນະທຳ ແລະ/ຫລື ທຳມະຊາດ ແລະ ໄດ້ຕາມມາດຕະຖານສິ່ງແວດລ້ອມ ແລະ ສຸຂະອະນາໄມ[3], ທັງໝົດເຫລົ່ານີ້ຕ້ອງກົງກັບບັນດາມາດຕະຖານອາຊຽນ; "ຜະລິດຕະພັນການທ່ອງທ່ຽວແບບຍືນຍົງ" ທີ່ນຳສະເໜີມາຂ້າງເທິງນັ້ນສາມາດຈອງໄດ້ທາງອອນລາຍ ຫລື ຢ່າງໜ້ອຍຈອງຜ່ານພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ບໍລິສັດທ່ອງທ່ຽວ, ຕົວແທນຈຳໜ່າຍການທ່ອງທ່ຽວ, ສູນຂໍ້ມູນການທ່ອງທ່ຽວ.

3. ຮູບແບບການແຂ່ງຂັນທີ່ກຳນົດໄວ້

ບົດນີ້ໄດ້ນຳສະເໜີຮູບແບບສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ລາຍລະອຽດຂອງແຜນວຽກໄດ້ຄັດຕິດມາພ້ອມນີ້ໃນເອກະສານຊ້ອນທ້າຍ 1):

- ຂັ້ນຕອນທີ 1 – ທຸກໆປີ, ຜູ້ລິເລີ່ມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ກະຊວງ ຖວທ ແຫ່ງ ສປປ ລາວ) ໂດຍໄດ້ຮັບການຊ່ວຍເຫລືອຈາກຄະນະກຳມະການທ່ອງທ່ຽວອາຊຽນ ຄັດເລືອກຫົວຂໍ້ທີ່ມີຄວາມເປັນເອກະພາບຮ່ວມກັນ ເພື່ອໃຫ້ບັນດາລັດຖະມົນຕີທ່ອງທ່ຽວອາຊຽນຮັບຮອງເອົາຢູ່ທີ່ງານມະຫາກຳທ່ອງທ່ຽວອາຊຽນ ໃນເດືອນມັງກອນຂອງທຸກໆປີ ກ່ອນພິທີຮັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ລາຍການຫົວຂໍ້ຄັດຕິດ ຢູ່ເອກສານຊ້ອນທ້າຍທີ);

➢ **ຫົວຂໍ້ທີ່ນຳສະເໜີສຳລັບການປະເມີນລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ສຳລັບປີ 2020-2021 ແມ່ນ "ການທ່ອງທ່ຽວທາງວັດທະນະທຳ ແລະ ມໍລະດົກ (Culture and Heritage)" ເນັ້ນໃສ່ປະເພດຜະລິດຕະພັນດັ່ງຕໍ່ໄປນີ້:**

- ການທ່ອງທ່ຽວທາງວັດທະນະທຳ ແລະ ມໍລະດົກແມ່ນການທ່ອງທ່ຽວຕິດພັນກັບວັດທະນະທຳ ແລະ ມໍລະດົກຂອງຊາດ ຫຼື ພາກພື້ນໃດໜຶ່ງ ທີ່ສະແດງເຖິງຄວາມເປັນເອກະລັກສະເພາະໂດຍເນັ້ນໃສ່ການສ້າງຄວາມເຂົ້າໃຈ ແລະ ຮຽນຮູ້ຄຸນຄ່າທາງມໍລະດົກວັດທະນະທຳຂອງປະຊາຊົນທ້ອງຖິ່ນ ແລະ ປະຫັວດສາດ ເຊັ່ນ: ວິຖີການດຳລົງຊີວິດ, ປະຫວັດຄວາມເປັນມາຂອງບັນດາເຜົ່າ, ສິລະປະວັນນະຄະດີ, ສະຖາປັດຕະຍາກຳ, ສາດສະໜາ ຫຼື ຄວາມເຊື່ອຖື, ງານບຸນປະເພນີ, ການນຸ່ງຖື, ໂຮງລະຄອນ, ຫໍພິພິທະພັນ, ວັດວາອາຮາມ, ຊຸມຄອງເກົ່າແກ່, ຮ່ອງຮອຍປະຫັວດສາດ, ສະໝໍລະພູມຮົບ ແລະ ອື່ນໆ. ການທ່ອງທ່ຽວທາງວັດທະນະທຳ ແລະ ມໍລະດົກໃນເຂດຕົວເມືອງເປັນຕົ້ນແມ່ນ: ວັດວາອາຮາມ, ຫໍພິພິຕະພັນ, ໂຮງລະຄອນ ແລະ ອື່ນໆ. ການທ່ອງທ່ຽວທາງວັດທະນະທຳ ແລະ ມໍລະດົກ

ໃນເຂດຊົນນະບົດເປັນຕົ້ນແມ່ນ: ອີດຄອງປະເພນີ, ງານບຸນປະເພນີ ແລະ ພິທີກຳຕ່າງໆທີ່ສະແດງໃຫ້ເຫັນເຖິງຄຸນຄ່າທາງດ້ານວັດທະນະທຳ ແລະ ວິຖີດຳລົງຊີວິດຂອງປະຊາຊົນທ້ອງຖິ່ນ.

ສປປ ລາວ ຮ່ວມກັບ ກອງເລຂາອາຊຽນເຜີຍແຜ່ ແລະ ແຈ້ງໃຫ້ບັນດາປະເທດສະມາຊິກຮັບຊາບກ່ຽວກັບລະບຽບການແຂ່ງຂັນ, ການປະກອບແບບຟອມ ແລະ ຂໍ້ມູນກ່ຽວກັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ.

ໝາຍເຫດ: ຫົວຂໍ້ກຳນົດຜະລິດຕະພັນເຂົ້າແຂ່ງຂັນແມ່ນຈະປ່ຽນທຸກໆ 2 ປີ, ຂຶ້ນກັບການຕົກລົງເຫັນດີເປັນເອກະພາບຂອງບັນດາປະເທດສະມາຊິກອາຊຽນ.

- **ຂັ້ນຕອນທີ 2 (ມັງກອນ-ມີຖຸນາ): ປະເທດສະມາຊິກອາຊຽນຈະຮັບຜິດຊອບດ້ານ:**
  - ✓ ແປເອກະສານສຳລັບການແຂ່ງຂັນ ແລະ ຈັດພິມເປັນພາສາທ້ອງຖິ່ນຂອງຕົນ.
  - ✓ ໂຄສະນາການແຂ່ງຂັນທາງເວັບໄຊ, ສື່ທີ່ມີການລົງປະຊາສຳພັນ, ສະມາຄົມການທ່ອງທ່ຽວແຫ່ງຊາດ ແລະ /ຫລື ບັນດາພະແນກທ່ອງທ່ຽວແຂວງ;
  - ✓ ເຜີຍແຜ່ຂໍ້ມູນກ່ຽວຂ້ອງກັບຫົວຂໍ້ ແລະ ລະບຽບໃນການເຂົ້າຮ່ວມການແຂ່ງຂັນ;
  - ✓ ສະໜັບສະໜູນ ແລະ ສະຫນອງເອກະສານທີ່ຈຳເປັນໃຫ້ແກ່ທີມຜູ້ສະໝັກ (ຄູ່ມື, ແບບຟອມ ແລະ ອື່ນໆ);
- **ຂັ້ນຕອນທີ 3 (ກໍລະກົດ – ຕຸລາ): ແຕ່ລະປະເທດຈະຮັບຜິດຊອບດ້ານ:**
  - ✓ ການຮັບເອົາໃບສະໝັກຈາກທີມຜູ້ສະໝັກ;
  - ✓ ການປະເມີນຕາມລະບຽບ ແລະ ຄວາມເໝາະສົມຂອງຜູ້ສະໝັກ;
  - ✓ ການສົ່ງຜູ້ປະເມີນມາດຕະຖານອາຊຽນໄປປະເມີນຜະລິດຕະພັນແຕ່ລະຢ່າງຕ້ອງມີຄວາມຮູ້ດ້ານວິຊາການ ແລະ ການບໍລິຫານ ເພື່ອປະເມີນຄຸນນະພາບດ້ານວິຊາການຂອງຜູ້ສະໝັກ (ການຈັດຕັ້ງປະຕິບັດມາດຖານທີ່ກ່ຽວຂ້ອງ)
- **ຂັ້ນຕອນທີ 4 (ກ) (ພະຈິກ-ທັນວາ): ຄະນະກຳມະການທ່ອງທ່ຽວອາຊຽນເຫັນດີເປັນເອກະພາບກັບບັນດາຜູ້ໄດ້ຮັບລາງ ວັນທີ່ໄດ້ຄັດເລືອກມາເພື່ອຮັບລາງວັນອັນຊົງກຽດລະດັບອາຊຽນ ເພື່ອເຮັດໄດ້ແບບນັ້ນ, ຈະຕ້ອງໃຊ້ຮູບແບບຄືຂ້າງລຸ່ມນີ້:**
  - ✓ ແຕ່ລະປະເທດຈະສົ່ງໃບສະໝັກຂອງຜູ້ທີ່ໄດ້ຮັບລາງວັນ 2 ລາງວັນ (ຕົວເມືອງ ແລະ ຊົນນະບົດ) ໃຫ້ແກ່ຄະນະກຳມະການການແຂ່ງຂັນການທ່ອງທ່ຽວອາຊຽນ, ຄະນະກຳມະການພັດທະນາການທ່ອງທ່ຽວແບບຍືນຍົງ ແລະ ມີສ່ວນຮ່ວມອາຊຽນ;
  - ✓ ຄະນະກຳມະການພັດທະນາການທ່ອງທ່ຽວແບບຍືນຍົງ ແລະ ມີສ່ວນຮ່ວມອາຊຽນ ແລະ ຄະນະກຳມະການຊອກຫາແຫລ່ງທຶນ, ກວດສອບ ແລະ ປະເມີນການທ່ອງທ່ຽວ ຈະ (i)ຢືນຢັນຜູ້ໄດ້ຮັບລາງວັນຈຳນວນ 20 ລາງວັນ (2 ລາງວັນຕໍ່ປະເທດ) ທີ່ຈະເປັນຜູ້ຮັບລາງວັນອາຊຽນ ແລະ (ii) ຈະແຈ້ງໃຫ້ກອງເລຂາອາຊຽນຮັບຊາບຜົນການຮັບລາງວັນ.

- **ຂັ້ນຕອນທີ 4 (ຂ) (ມັງກອນ – ງານມະຫາກຳທ່ອງທ່ຽວອາຊຽນ):** ບັນດາຜູ້ໄດ້ຮັບລາງວັນທັງໝົດຈະຖືກເຊື້ອເຊີນເຂົ້າຮ່ວມງານມະຫາກຳທ່ອງທ່ຽວອາຊຽນເພື່ອຮັບລາງວັນຢູ່ໃນພິທີຮັບດັ່ງກ່າວ.

4. ການດຳເນີນງານດ້ານການບໍລິຫານ

ຄວາມຮັບຜິດຊອບໃນການບໍລິຫານ ແລະ ດຳເນີນການຈັດຕັ້ງປະຕິບັດບັນດາຂັ້ນຕອນການຮັບລາງວັນແມ່ນການແລກປ່ຽນລະຫວ່າງຜູ້ລິເລີ່ມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ກະຊວງ ຖວທ ແຫ່ງ ສປປ ລາວ), ບັນດາປະເທດສະມາຊິກອາຊຽນ, ຄະນະກຳມະການທ່ອງທ່ຽວທີ່ກ່ຽວຂ້ອງ ແລະ ກອງເລຂາ ເພື່ອເຮັດໃຫ້ດຳເນີນການໄດ້ ແລະ ຄຸ້ມຄອງໄດ້.

ໄລຍະການກະກຽມ (1) ກຳນົດເອົາຫົວຂໍ້ທີ່ຊັດເຈນ, ມີເຫດຜົນ ແລະ ມີຄວາມເຫັນດີເປັນເອກະພາບນຳກັນແບບທົ່ວໄປ ແລະ ແບບສະເພາະສຳລັບການແຂ່ງຂັນຜະລິດຕະພັນໃນເມືອງ ແລະ ຊົນນະບົດ.

- ✓ ພາຍໃຕ້ຄວາມຮັບຜິດຊອບຂອງຜູ້ລິເລີ່ມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ກະຊວງ ຖວທ ແຫ່ງ ສປປ ລາວ) ໂດຍໄດ້ຮັບການຊ່ວຍເຫລືອຈາກບັນດາປະເທດສະມາຊິກອາຊຽນພ້ອມກັບການຮັບຮອງຄັ້ງສຸດທ້າຍຈາກບັນດາລັດຖະມົນຕີທ່ອງທ່ຽວອາຊຽນຢູ່ທີ່ງານມະຫາກຳທ່ອງທ່ຽວອາຊຽນ ທີ່ຈະຈັດຂຶ້ນຢູ່ທີ່ກອງປະຊຸມຄະນະກຳມະການທ່ອງທ່ຽວອາຊຽນກ່ອນງານມະຫາກຳທ່ອງທ່ຽວອາຊຽນ.

ການກະກຽມໄລຍະ (2) ການທົບທວນຄືນ ແລະ ດັດແກ້ມາດຖານການຄັດເລືອກ(ຖ້າຈຳເປັນ) ແລະ ການຕື່ມແບບຟອມ

- ✓ ພາຍໃຕ້ຄວາມຮັບຜິດຊອບຂອງຜູ້ລິເລີ່ມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ກະຊວງ ຖວທ ແຫ່ງ ສປປ ລາວ) ໂດຍໄດ້ຮັບການຊ່ວຍເຫລືອຈາກຄະນະກຳມະການຊອກຫາແຫລ່ງທຶນ, ກວດສອບ ແລະ ປະເມີນຜົນອາຊຽນ ແລະ ປະທານອົງການທ່ອງທ່ຽວແຫ່ງຊາດຕ່າງໆ.

ໄລຍະການຈັດຕັ້ງປະຕິບັດ – ການເຜີຍແຜ່ໃບສະເໜີ ແລະ ຄຳແນະນຳໃນການຂໍສະໝັກ

- ✓ ເລີ່ມຈາກການຖະແຫລງຂ່າວຢູ່ທີ່ງານມະຫາກຳທ່ອງທ່ຽວອາຊຽນ;
- ✓ ພາຍໃຕ້ຄວາມຮັບຜິດຊອບຂອງບັນດາປະເທດສະມາຊິກອາຊຽນ ຊຶ່ງຈຳເປັນຕ້ອງ:
  - ແປ ແລະ ຈັດພິມເອກະສານການແຂ່ງຂັນ;
  - ເຜີຍແຜ່ຂໍ້ມູນກ່ຽວກັບການເປີດການແຂ່ງຂັນລາງວັນການທ່ອງທ່ຽວແບບຍືນຍົງອາຊຽນໂດຍຜ່ານທາງ ໂທລະພາບ, ວິທະຍຸ, ໜັງສືພິມ, ສະມາຄົມທ່ອງທ່ຽວ, ຫ້ອງການປົກຄອງເມືອງ ແລະ ຊ່ອງທາງອື່ນໆ.;
  - ແຕ່ງຕັ້ງທີມງານເພື່ອຕອບຄຳຖາມຜູ້ສະໝັກຢ່າງທັນການ.

ການຄັດເລືອກຜູ້ໄດ້ຮັບລາງວັນ;

- ✓ ໃນລະດັບຊາດ – ໃບສະເໜີສະແດງໃຫ້ເຫັນເຖິງການປະຕິບັດຕາມລະບຽບການ ແລະ ໄດ້ຕາມມາດຖານຄວາມເໝາະສົມ ຈະຕ້ອງໄດ້ຮັບການປະເມີນດ້ານຄຸນນະພາບ ແລະ ຄວາມຍືນຍົງຂອງການຮ່ວມມືຈາກອົງ

ການທ່ອງທ່ຽວແຫ່ງຊາດຂອງປະເທດສະມາຊິກອາຊຽນ. ໃບສະເໜີ 3 ໃບທີ່ຖືກຄັດເລືອກ ຕາມແຕ່ລະປະເພດ (ຊົນນະບົດ ແລະ ຕົວເມືອງ) ຈະຕ້ອງຜ່ານການກວດສອບຈາກຜູ້ປະເມີນຈາກຫ້ອງການປົກຄອງແຂວງ/ເມືອງ ຫລື ອົງການທ່ອງທ່ຽວແຫ່ງຊາດ ເພື່ອກວດສອບໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະ ເພື່ອກວດສອບຂໍ້ມູນທີ່ນຳສະເໜີໂດຍບັນດາຄູ່ແຂ່ງ.

✓ ໃນລະດັບອາຊຽນ – ຜະລິດຕະພັນທີ່ຊະນະການແຂ່ງຂັນ 2 ຢ່າງ ສຳລັບປະເທດສະມາຊິກອາຊຽນແຕ່ລະປະເທດແມ່ນໄດ້ຜ່ານສາມໄລຍະທຳອິດທີ່ມີຄະແນນສູງສຸດຈະຖືກສົ່ງໄປຫາຄະນະກຳມະການປະເມີນຜົນ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກຄະນະກຳມະການການແຂ່ງຂັນການທ່ອງທ່ຽວອາຊຽນ, ຄະນະກຳມະການພັດທະນາການທ່ອງທ່ຽວແບບຍືນຍົງ ແລະ ມີສ່ວນຮ່ວມອາຊຽນ ແລະ ຜູ້ຕາງໜ້າ 1 ທ່ານຈາກສະມາຄົມທ່ອງທ່ຽວອາຊຽນ ເພື່ອຢືນຢັນການຄັດເລືອກຂັ້ນສຸດທ້າຍຈາກອົງການທ່ອງທ່ຽວແຫ່ງຊາດຂອງແຕ່ລະປະເທດສະມາຊິກ.

ການຈັດພິທີຮັບລາງວັນລະດັບສາກົນ;

✓ ກອງເລຂາອາຊຽນສະໜັບສະໜຸນການເຮັດວຽກຂອງຜູ້ລິເລີ່ມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ກະຊວງ ຖວທ ແຫ່ງ ສປປ ລາວ) ໂດຍຮ່ວມມືກັບປະທານອົງການທ່ອງທ່ຽວແຫ່ງຂອງປະເທດສະມາຊິກອາຊຽນ ແລະ ປະສານສົມທົບກັບການຈັດພິທີຮັບລາງວັນກັບອົງການທ່ອງທ່ຽວແຫ່ງຊາດຂອງແຕ່ລະປະເທດ.

ການຕະຫລາດ ແລະ ການໂຄສະນາສຳລັບຜູ້ໄດ້ຮັບລາງວັນ (ລາຍລະອຽດເພີ່ມເຕີ່ມຢູ່ໃນບົດທີ 6)

✓ ລະດັບຊາດ - ແຕ່ລະປະເທດຕ້ອງປະຕິບັດຕາມແຜນການສື່ສານເພື່ອ:

- ສົ່ງເສີມຜະລິດຕະພັນທີ່ໄດ້ຮັບລາງວັນໂດຍສ້າງໂຄສະນາທີ່ໜ້າສົນໃຈ ເຊັ່ນ: ເນື້ອໃນ, ຮູບພາບ, ວິດີໂອ ແລະ ອື່ນໆ;
- ໂຄສະນາຜະລິດຕະພັນທີ່ໄດ້ຮັບລາງວັນຕາມເວັບໄຊ ແລະ ກິດຈະກຳສົ່ງເສີມການທ່ອງທ່ຽວໃນລະດັບຊາດ (ງານສະແດງສິນຄ້າ, ປຶ້ມລາຍການສິນຄ້າ ແລະ ອື່ນໆ);
- ລິ້ງໂຄສະນາ ເພື່ອສົ່ງເສີມຜະລິດຕະພັນທີ່ໄດ້ຮັບລາງວັນໃນລະດັບຊາດ ແລະ ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ;
- ຈັດລາຍການສົ່ງເສີມ ຫລື ລາຍການເດີນທາງເພື່ອສ້າງຄວາມລຶ້ງເຄີຍກັບບໍລິສັດທ່ອງທ່ຽວລະດັບຊາດ ແລະ ບໍລິສັດທ່ອງທ່ຽວຢ້ຽມຊົມຜະລິດຕະພັນທີ່ໄດ້ຮັບລາງວັນ ແລະ ອຳນວຍຄວາມສະດວກໃນການເຂົ້າໃຈການຕະຫລາດ (ທາງເລືອກ).

✓ ໃນລະດັບອາຊຽນ – ກອງເລຂາອາຊຽນ ແລະ ບັນດາປະເທດທ່ອງທ່ຽວອາຊຽນທີ່ກ່ຽວຂ້ອງຈະ:

- ລວມເນື້ອໃນການໂຄສະນາໂດຍອົງການທ່ອງທ່ຽວແຫ່ງຊາດຂອງແຕ່ລະປະເທດທີ່ກ່ຽວຂ້ອງກັບຜະລິດຕະພັນທີ່ໄດ້ຮັບລາງວັນຕາມເວັບໄຊ www.aseantourism.travel;
- ຈັດຖະແຫລງຂ່າວຢູ່ທີ່ງານມະຫາກຳທ່ອງທ່ຽວອາຊຽນ ເພື່ອນຳສະເໜີຜະລິດຕະພັນທີ່ໄດ້ຮັບລາງວັນ - ຢ່າງໜ້ອຍມີນັກຂ່າວໜຶ່ງຄົນຈາກປະເທດສະມາຊິກອາຊຽນ ແລະ ສື່ສາກົນໜຶ່ງຄົນ ຖືກເຊີນເຂົ້າ

ຮ່ວມງານ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ຮູ້ຈັກກ່ຽວກັບຜະລິດຕະພັນການທ່ອງທ່ຽວແບບຍືນຍົງອາຊຽນໃຫ້ຫລາຍຂຶ້ນ;

- ນຳສະເໜີຜະລິດຕະພັນທີ່ໄດ້ຮັບລາງວັນ ທີ່ເປັນ "ຜະລິດຕະພັນດີເດັ່ນ" ເຂົ້າຮ່ວມງານມະຫາກຳການທ່ອງທ່ຽວສາກົນ ເຊັ່ນ: ITB ແລະ ອຳນວຍຄວາມສະດວກໃນການສ້າງເຄືອຄ່າຍກັບບັນດາທຸລະກິດທ່ອງທ່ຽວ; ໂຄສະນາຜະລິດຕະພັນທີ່ໄດ້ຮັບລາງວັນ ເປັນພິເສດຈົນກ່ວາຈະມີການແຂ່ງຂັນໃນຄັ້ງຕໍ່ໄປ ຕາມເວັບໄຊ www.aseantourism.travel.

IV. ການກຳນົດມາດຖານໃນການຄັດເລືອກ

1. ນິຍັດ

ແນວຄິດລິເລີ່ມຂອງລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ (ASTA) ໄດ້ສ້າງຂຶ້ນພາຍໃຕ້ກອບນິຍາມ ການພັດທະນາການທ່ອງທ່ຽວແບບຍືນຍົງ ດັ່ງລະບຸໄວ້ຢູ່ໃນ "ແຜນຍຸດທະສາດການທ່ອງທ່ຽວອາຊຽນ 2011-2015" ໂດຍມີຈຸດປະສົງເພື່ອເນັ້ນສິ່ງເສີມ ແລະ ປະກອບສ່ວນເຂົ້າໃສ່ການພັດທະນາແບບຍືນຍົງຂອງຈຸດໝາຍປາຍທາງການທ່ອງທ່ຽວອາຊຽນ.

ແນວຄິດລິເລີ່ມນີ້ເປັນແນວຄິດສິ່ງເສີມວິໄສທັດດ້ານການທ່ອງທ່ຽວໃນປີ 2025 ສຳລັບອາຊຽນເພື່ອຮັບປະກັນໃຫ້ "ອາຊຽນກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ມີຄຸນນະພາບ, ມີເອກະລັກສະເພາະ, ມີຄວາມຫລາກຫລາຍ ແລະ ຈະເນັ້ນໃສ່ການພັດທະນາການທ່ອງທ່ຽວແບບມີຄວາມຮັບຜິດຊອບ, ມີຄວາມຍືນຍົງ, ມີສ່ວນຮ່ວມ ແລະ ເທົ່າທຽມກັນ ເພື່ອເປັນການປະກອບສ່ວນອັນສຳຄັນໃຫ້ແກ່ຄວາມຜາສຸກດ້ານເສດຖະກິດ-ສັງຄົມຂອງອາຊຽນ".

ເພື່ອໃຫ້ໄດ້ແນວຄິດທີ່ຊັດເຈນກ່ຽວກັບການເຮັດໃຫ້ລາງວັນການທ່ອງທ່ຽວ ແບບຍືນຍົງອາຊຽນເປັນຮູບປະທຳ, ເອກະສານນີ້ສະແດງໃຫ້ເຫັນວ່າ ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ມີຈຸດປະສົງເພື່ອຊ່ວຍສົ່ງເສີມບັນດາມາດຕະຖານການທ່ອງທ່ຽວອາຊຽນ ລະຫວ່າງພາກລັດ ແລະ ພາກທຸລະກິດ. ນອກຈາກນັ້ນ, ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ຍັງແນໃສ່ເພື່ອສ້າງແຮງຈູງໃຈໃຫ້ແກ່ຈຸດໝາຍປາຍທາງການທ່ອງທ່ຽວອາຊຽນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮ່ວມກັນພັດທະນາການທ່ອງທ່ຽວ ແລະ ຫລຸດຜ່ອນບັນຫາຜົນກະທົບດ້ານສິ່ງແວດລ້ອມ, ວັດທະນະທຳ-ສັງຄົມ ແລະ ເສດຖະກິດ ທີ່ເກີດຈາກການຂະຫຍາຍຕົວຢ່າງວ່ອງໄວຂອງການທ່ອງທ່ຽວ. ຂະນະດຽວກັນກໍ່ໃຫ້ຄຳແນະນຳ ແລະ ແຮງຈູງໃຈທີ່ເປັນປະໂຫຍດໃຫ້ແກ່ພາກລັດ ແລະ ພາກທຸລະກິດ ເພື່ອປັບປຸງຜະລິດຕະພັນ ແລະ ການບໍລິການຂອງຕົນໃຫ້ໄດ້ຕາມກັບມາດຕະຖານທີ່ມີຢູ່.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດລາງວັນການທ່ອງທ່ຽວແບບຍືນຍົງອາຊຽນດຳເນີນໄປດ້ວຍຄວາມຍຸຕິທຳ,ຈຳເປັນຕ້ອງໄດ້ກຳນົດລະບຽບທີ່ຊັດເຈນ, ໂປ່ງໃສ ແລະ ຍຸຕິທຳ ໃນການຄັດເລືອກຜູ້ໄດ້ຮັບລາງວັນທັງລະດັບອາຊຽນ ແລະ ລະດັບຊາດ. ເອກະສານນີ້ໄດ້ຮວບຮວມເອົາວິທີ ແລະ ມາດຕະຖານໃນການຄັດເລືອກ ເພື່ອໃຫ້ໄດ້ລາງວັນການທ່ອງທ່ຽວແບບຍືນ

ຍືງອາຊຽນ. ລະບົບການໃຫ້ຄະແນນສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ແນໃສ່ເພື່ອເຮັດໃຫ້ການໃຫ້ຄະແນນແກ່ຜູ້ສະໝັກນັ້ນ ເຊື່ອຖືໄດ້.

2. ການຕັ້ງກົດລະບຽບສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ

ຂໍ້ນີ້ໄດ້ອະທິບາຍຂັ້ນຕອນການຄັດເລືອກ ໂດຍອີງຕາມມາດຕະຖານທີ່ສາມາດກວດສອບໄດ້, ມີຄວາມໂປ່ງໃສ ແລະ ມີຄວາມສອດຄ່ອງ. ຈຸດປະສົງກໍ່ເພື່ອເພີ່ມຄວາມໂປ່ງໃສ ແລະ ຂະບວນການຄັດເລືອກ. ຫລັງຈາກສົ່ງໃບສະເໜີແລ້ວ, ຈະຕ້ອງຜ່ານຂັ້ນຕອນການປະເມີນສອງຂັ້ນຕອນ ຊຶ່ງຂັ້ນຕອນທຳອິດແມ່ນລະດັບຊາດ ຊຶ່ງຈະຖືກປະເມີນໂດຍບັນດາອົງການທ່ອງທ່ຽວຂອງ 10 ປະເທດສະມາຊິກອາຊຽນ (ການປະເມີນພາກທິດສະດີ ແລະ ປະຕິບັດຕົວຈິງ) ແລະ ສຸດທ້າຍແມ່ນລະດັບອາຊຽນ ຊຶ່ງຈະຖືກປະເມີນໂດຍຄະນະກຳມະການທ່ອງທ່ຽວອາຊຽນ (ການຢືນຢັນຂອງຜູ້ໄດ້ຮັບລາງວັນອາຊຽນ). ການສ້າງຕັ້ງກົດລະບຽບສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ປະກອບມີ:

- ເງື່ອນໄຂ ແລະ ຂໍ້ຍົກເວັ້ນໃນການເຂົ້າຮ່ວມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ເຊັ່ນ: ຄະແນນໃຫ້ຜ່ານ
- ການປະເມີນຕົນເອງຕາມມາດຕະຖານການທ່ອງທ່ຽວອາຊຽນ;
- ກວດສອບຜະລິດຕະພັນທີ່ເລືອກໄວ້ແລ້ວ.

ການເຜີຍແຜ່ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ລວມທັງການຄຸ້ມຄອງ ແລະ ຄັດເລືອກໃນການແຂ່ງຂັນໃຫ້ມີຄວາມເທົ່າທ່ຽວກັນ.

2.1. ເງື່ອນໄຂ ແລະ ຂໍ້ຍົກເວັ້ນໃນການເຂົ້າຮ່ວມລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ

ຜະລິດຕະພັນທັງໝົດທີ່ຢູ່ໃນບັນດາປະເທດອາຊຽນ ແມ່ນມີສິດໃນການເຂົ້າຮ່ວມການແຂ່ງຂັນ ເພື່ອຮັບລາງ ວັນການທ່ອງທ່ຽວແບບຍືນຍົງອາຊຽນ. ອາດມີຄວາມເປັນໄປໄດ້ທີ່ຈະລວມເອົາພາກສ່ວນອື່ນທີ່ບໍ່ແມ່ນອາຊຽນເຂົ້າໃສ່ໃບສະເໜີນອກຈາກພາກສ່ວນທີ່ກ່ຽວຂ້ອງໃນພາກພື້ນ. ຄູ່ຮ່ວມຕ່າງປະເທດບໍ່ສາມາດທົດແທນຄູ່ຮ່ວມໃນພາກພື້ນໄດ້ ແລະ ບໍ່ສາມາດເປັນຜູ້ສະໝັກໄດ້.

ຜະລິດຕະພັນທີ່ສົນໃຈຈະຖືກກວດສອບ ຕາມມາດຕະຖານການຄັດເລືອກ ເພື່ອຮັບປະກັນໃຫ້ໄດ້ຕາມມາດຖານການບໍລິຫານ ແລະ ດ້ານວິຊາການຂອງການໃຫ້ລາງວັນ. ນີ້ແມ່ນຂັ້ນຕອນການເປີດ-ປິດ. ໃບສະເໜີທີ່ບໍ່ໄດ້ຕາມມາດຖານການໃຫ້ລາງດັ່ງທີ່ກ່າວມາຂ້າງເທິງນັ້ນຖືວ່າບໍ່ຜ່ານໃຫ້ຮອດຂັ້ນຕອນການຄັດເລືອກທີ່ 2.

2.2. ການຄັດເລືອກໄລຍະທີ 1 “ສິດໃນການສະໝັກ” ການຄັດເລືອກຜະລິດຕະພັນທີ່ຈະຖືກປະເມີນ

- ມາດຖານທຳອິດ: ໃບສະເໜີແຕ່ລະໃບຕ້ອງສົ່ງທັນຕາມກຳນົດເວລາ, ຕື່ມຂໍ້ມູນໃສ່ໃຫ້ຖືກຕ້ອງ ແລະ ຖືກຕາມຮູບແບບທີ່ກຳນົດໄວ້;
- ມາດຖານທີ 2: ໃບສະເໜີແຕ່ລະໃບຕ້ອງສະເໜີຜະລິດຕະພັນການທ່ອງທ່ຽວແບບມີຄວາມຮັບຜິດຊອບທີ່ມີຢູ່ແລ້ວ ແລະ ໃຫ້ການບໍລິການຢ່າງໜ້ອຍ 1 ປີ (ຜະລິຕະພັນທີ່ສະເໜີຕ້ອງອີງໃສ່ຫົວຂໍ້ການແຂ່ງຂັນຂອງປີ ນັ້ນໆ), ຜະລິດຕະພັນທີ່ສະເໜີຕ້ອງລວມມີພາກສ່ວນຕ່າງໆດັ່ງນີ້:

1. ມີຫ້ອງນ້ຳສາທາລະນະສະອາດອາຊຽນ ຢ່າງໜ້ອຍ 1 ແຫ່ງ
2. ມີສະຖານທີ່ພັກແຮມ (ໂຮງແຮມຂຽວອາຊຽນ ຫຼື ເຮືອນພັກແຮມປະຊາຊົນອາຊຽນ) ຢ່າງໜ້ອຍ 1 ແຫ່ງ
3. ມີຮ້ານອາຫານ ແລະ ເຄື່ອງທີ່ສະອາດປອດໄພໄດ້ມາດຕະຖານ ຢ່າງໜ້ອຍ 1 ແຫ່ງ
4. ມີພະນັກງານນຳທ່ຽວສະເພາະພື້ນທີ່ (ລະດັບແຂວງ ຫຼື ລະດັບຊາດ) ຫຼື ບໍລິສັດທ່ອງທ່ຽວ/ຕົວແທນຈຳໜ່າຍການທ່ອງທ່ຽວ ຢ່າງໜ້ອຍ 1 ຄົນ/ແຫ່ງ
5. ການມີສ່ວນຮ່ວມຂອງຊຸມຊົນກ່ຽວກັບຜະລິດຕະພັນ ແລະ ກິດຈະກຳຕ່າງໆ ຢ່າງໜ້ອຍ 1 ຊຸມຊົນຊຶ່ງຄຸ້ມຄອງ ແລະ ໂຄສະນາຮ່ວມກັນທັງພາກລັດ ແລະ ພາກທຸລະກິດຢ່າງໜ້ອຍ 1 ແຫ່ງ, ສ້າງຜົນປະໂຫຍດທາງກົງ ແລະ ທາງອ້ອມໃຫ້ແກ່ປະຊາຊົນທ້ອງຖິ່ນ, ສົ່ງເສີມມໍລະດົກທາງວັດທະນະທຳ ແລະ/ຫລື ທຳມະຊາດ ແລະ ສອດຄ່ອງກັບມາດຕະຖານດ້ານສິ່ງແວດລ້ອມ ແລະ ສຸຂະອະນາໄມ.

- **ມາດຖານທີ 3 (ຜະລິດຕະພັນໃນເມືອງເທົ່ານັ້ນ):** ທີມຜູ້ສະໝັກຕ້ອງປະຕິບັດຕາມຄວາມໝາຍຂອງຜະລິດຕະພັນໃນເມືອງ.
- **ມາດຖານທີ 3 (ຜະລິດຕະພັນຊົນນະບົດເທົ່ານັ້ນ):** ທີມຜູ້ສະໝັກຕ້ອງປະຕິບັດຄວາມໝາຍຂອງຜະລິດຕະພັນຊົນນະບົດ.

2.3. ການຄັດເລືອກໄລຍະທີ 2 "ການປະເມີນພາກທິດສະດີ" ການຄັດເລືອກທີມຜູ້ສະໝັກທີ່ຈະຖືກປະເມີນ (ມີທາງເລືອກ)

ມີພຽງແຕ່ໃບສະເໜີທີ່ໄດ້ຕາມການຄັດເລືອກໄລຍະທີ 1 ເທົ່ານັ້ນ ຈຶ່ງຈະຖືກປະເມີນດ້ານທິດສະດີກ່ອນຕາມ **(i) ມາດຕະຖານສາກົນ GSTC ກ່ຽວກັບຄວາມຍືນຍົງຂອງຈຸດມາຍປາຍທາງຂອງຜະລິດຕະພັນ ແລະ (ii) ມາດຕະຖານອາຊຽນ.** ສິ່ງນີ້ປະກອບມີການປະເມີນມາດຖານທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ:

- ຢ່າງໜ້ອຍມີການບໍລິການໜຶ່ງຢ່າງທີ່ໄດ້ຮັບໃບຢັ້ງຢືນເປັນຜະລິດຕະພັນດີເດັ່ນໜຶ່ງປີກ່ອນມີການແຂ່ງຂັນ.
- ປະຕິບັດຕາມມາດຕະຖານອາຊຽນ (ເບິ່ງຢູ່ແບບຟອມການປະເມີນຕົນເອງ). ຄະແນນລວມທັງໝົດໃນແຕ່ລະປະເພດຕ້ອງບໍ່ຫລຸດ 50%. ມາດຖານການຄັດເລືອກຄັ້ງສຸດທ້າຍແບ່ງອອກເປັນ 2 ປະເພດຄື: ຜະລິດຕະພັນໃນເມືອງ ແລະ ຊົນນະບົດ.

⇨ <u>ມາດຕະຖານທີ່ກ່ຽວຂ້ອງກັບຜະລິດຕະພັນທ່ອງທ່ຽວໃນເມືອງອາຊຽນ</u> – ການປະເມີນໃບສະເໜີຕ້ອງກ່ຽວຂ້ອງກັບ 3 ມາດຕະຖານການທ່ອງທ່ຽວອາຊຽນ (ມາດຕະຖານໂຮງແຮມຂຽວອາຊຽນ, ມາດຕະຖານຫ້ອງນ້ຳສາທາລະນະອາຊຽນ, ແລະ ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ຫລື ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ);

- ⇨ <u>ມາດຕະຖານທີ່ກ່ຽວຂ້ອງກັບຜະລິດຕະພັນທ່ອງທ່ຽວຊຸມຊົນບົດອາຊຽນ</u> – ການປະເມີນໃບສະເໜີຕ້ອງກ່ຽວຂ້ອງກັບ 3 ມາດຕະຖານການທ່ອງທ່ຽວອາຊຽນ (ມາດຕະຖານໂຮງແຮມຂຽວອາຊຽນ, ມາດຕະຖານຫ້ອງນ້ຳສາທາລະນະອາຊຽນ, ແລະ ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ): ເຊັ່ນ: ສະຖານທີ່ພັກແຮມອາດຖືກປະເມີນຕາມມາດຕະຖານໂຮງແຮມຂຽວ ຫລື ເຮືອນພັກແຮມນຳບ້ານປະຊາຊົນ.

2.4. ການຄັດເລືອກໄລຍະທີ 3 "ປະເມີນຕົວຈິງໂດຍບັນດາຜູ້ປະເມີນລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ" ການຄັດເລືອກໄລຍະສຸດທ້າຍຂອງ 2 ຜະລິດຕະພັນທີ່ຜ່ານ

ຈາກຜົນການຄັດເລືອກໄລຍະທີ 2, ໃບສະເໜີທີ່ໄດ້ຮັບການຄັດເລືອກ (1 ໃນ 3) ຢູ່ໃນປະເທດອາຊຽນຈະຕ້ອງຜ່ານການປະເມີນຈາກຜູ້ປະເມີນ ຈາກຫ້ອງການປົກຄອງແຂວງ, ເມືອງ ຫລື ຂະແໜງການທ່ອງທ່ຽວ ເພື່ອຮັບປະກັນໃຫ້ໄດ້ຕາມມາດຕະຖານການທ່ອງທ່ຽວອາຊຽນ ແລະ ຄວາມຖືກຕ້ອງຂອງຂໍ້ມູນທີ່ນຳສະເໜີໂດຍຜູ້ສະໝັກ.

ຖ້າລົງປະຕິບັດຕົວຈິງ, (ຜູ້ສະໝັກ) ຖ້າຫາກຜົນການປະເມີນຕົນເອງຕາມມາດຕະຖານການທ່ອງທ່ຽວອາຊຽນແຕກຕ່າງຈາກຜົນການປະເມີນຂອງຜູ້ປະເມີນລະດັບຊາດ (ຄະແນນບໍ່ຮອດ 30%) ຈະຖືກຄັດອອກຈາກການແຂ່ງຂັນໂດຍອັດຕະໂນມັດ.

2.5. ການຄັດເລືອກໄລຍະທີ 4 "ການຢືນຢັນຈາກອາຊຽນ"

ສອງຜະລິດຕະພັນທີ່ໄດ້ຮັບລາງວັນສຳລັບແຕ່ລະປະເທດສະມາຊິກອາຊຽນຕ້ອງຜ່ານ 3 ຂັ້ນຕອນທຳອິດ ດ້ວຍຄະແນນສູງສຸດຈະຖືກສົ່ງໄປໃຫ້ຄະນະກຳມະການປະເມີນ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກ<u>ຄະນະກຳມະການທ່ອງທ່ຽວແບບຍືນຍົງ ແລະ ມີສ່ວນຮ່ວມອາຊຽນ ແລະ/ຫລື ຜູ້ຕາງໜ້າຈາກຄະນະກຳມະການຊອກຫາແຫລ່ງທຶນ, ກວດສອບ ແລະ ປະເມີນການທ່ອງທ່ຽວອາຊຽນ ເພື່ອຢືນຢັນຜູ້ໄດ້ຮັບລາງວັນໃນລະດັບອາຊຽນ 20 ລາງວັນ.</u>

2.6. ການຄິດໄລ່ຄະແນນລວມ

ຈຸດປະສົງຂອງລະບົບການໃຫ້ຄະແນນຄືການໃຫ້ມີນ້ຳໜັກເທົ່າກັນທັງຜະລິດຕະພັນ ແລະ ຄູ່ຮ່ວມມື–ຖ້າມີຜຽງຢ່າງດຽວກໍ່ບໍ່ສາມາດເຮັດໄດ້. ການເປັນຄູ່ຮ່ວມມືທີ່ມີຄວາມຮັບຜິດຊອບລະຫວ່າງພາກລັດ ແລະ ພາກທຸລະກິດລວມທັງຊຸມຊົນທ້ອງຖິ່ນ ຖືວ່າເປັນປັດໄຈສຳຄັນໃນການຄຸ້ມຄອງທຸກຜະລິດຕະພັນໃຫ້ມີຄວາມຍືນຍົງ. ເພື່ອເຂົ້າຮ່ວມການແຂ່ງຂັນລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ, ການສະໝັກນັ້ນບໍ່ຈຳເປັນຕ້ອງໄດ້ຄະແນນສູງໃນທຸກປະເພດ. ເຖິງແນວໃດກໍ່ຕາມ, ຄະແນນລວມທັງໝົດໃນແຕ່ລະປະເພດແມ່ນບໍ່ໃຫ້ຫລຸດ 50% ຈຶ່ງຈະມີສິດຜ່ານໄດ້.

- ➢ *<u>ການຄິດໄລ່ຄະແນນມາດຖານກ່ຽວຂ້ອງກັບການຄຸ້ມຄອງຈຸດໝາຍປາຍທາງແບບຍືນຍົງ</u>*

ຄະແນນມາດຕະຖານທີ່ກ່ຽວຂ້ອງກັບການຄຸ້ມຄອງຈຸດໝາຍປາຍທາງແບບຍືນຍົງ ທີ່ໃຫ້ລາງວັນແກ່ຜູ້ເຂົ້າແຂ່ງຂັນທີ່ຂາຍຜະລິດຕະພັນທີ່ມີຄວາມຮັບຜິດຊອບ ສະແດງໃຫ້ເຫັນເຖິງການຄຸ້ມຄອງຈຸດໝາຍປາຍທາງແບບຍືນຍົງ. ຄະແນນສູງສຸດທີ່ຈະໄດ້ຮັບແມ່ນ 14 ຄະແນນ. ບໍ່ມີຄະແນນຕ່ຳສຸດສຳລັບໄລຍະຕໍ່ໄປສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາ

ຊຽນ. ເນື່ອງຈາກວ່າບັນດາຕົວຊີ້ວັດເຫລົ່ານີ້ຄັດມາຈາກຕົວຊີ້ວັດລະດັບສາກົນຈຶ່ງຖືວ່າເປັນຄະແນນເພີ່ມພິເສດໃຫ້ແກ່ຜູ້ສະໝັກ.

➢ *ການຄິດໄລ່ຄະແນນຕາມມາດຖານທີ່ຄັດເລືອກມາຈາກມາດຕະຖານຄວາມຍືນຍົງອາຊຽນ*

ມັນມີຄຸນຄ່າຫລາຍທີ່ຜະລິດຕະພັນທັງສອງປະເພດສາມາດນຳສະເໜີຮັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ: ຜະລິດຕະພັນໃນເມືອງ ແລະ ຊົນນະບົດ.

ມີການເຜີຍແຜ່ມາດຖານ ແລະ ວິທີການປະເມີນທີ່ກ່ຽວຂ້ອງກັບບັນດາມາດຕະຖານອາຊຽນຕ່າງໆ. ດັ່ງນັ້ນ, ລະບົບການຈັດລະດັບດັ່ງກ່າວຈຶ່ງທຽບເທົ່າກັບລະບົບທີ່ອາຊຽນໄດ້ກຳນົດໄວ້ໃນເອກະສານສະບັບນີ້ (ເອກະສານຊ້ອນທ້າຍ 3) ໂດຍມີຂໍ້ຍົກເວັ້ນວ່າມາດຖານຕ່ຳສຸດຄວນຖືກປະເມີນກ່ອນສຳລັບລາງວັນການທ່ອງທ່ຽວ ແບບຍືນຍົງອາຊຽນ ທີ່ກ່ຽວຂ້ອງກັບມາດຕະຖານອາຊຽນ (ມາດຕະຖານຫ້ອງນ້ຳສາທາລະນະ ແລະ ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ). ອັນທີ່ຈິງແລ້ວ, ມາດຖານໂດຍລວມຂອງແຕ່ລະມາດຕະຖານການທ່ອງທ່ຽວອາຊຽນ ຖືວ່າຍັງບໍ່ທັນເຂົ້າເຖິງຈຸດໝາຍປາຍທາງການທ່ອງທ່ຽວຫລາຍແຫ່ງເທື່ອ.

ດັ່ງນັ້ນ, ລະບົບການໃຫ້ຄະແນນຈຶ່ງອີງຕາມຈຳນວນມາດຖານ ເພື່ອໃຫ້ຜະລິດຕະພັນອາຊຽນທັງໝົດໄດ້ມີໂອກາດທີ່ຈະຖືກຄັດເລືອກທັງໃນລະດັບຊາດ ແລະ ລະດັບອາຊຽນ.

1. **ຜູ້ສະໝັກຕ້ອງປະຕິບັດຕາມຂໍ້ກຳນົດຂອງແຕ່ລະມາດຖານ (ການເລືອກເອົາມາດຖານການທ່ອງທ່ຽວອາຊຽນ) ເປັນສ່ວນຮ້ອຍ (ເປີເຊັ້ນ).**

- ຖ້າມີຂໍ້ກຳນົດຫລາຍຂໍ້ຕໍ່ມາດຖານດຽວກັນ ເຊັ່ນ: ໂຮງແຮມ 2 ຫລັງ ຫລື ຫ້ອງນ້ຳ 3 ຫລັງ, ແຕ່ລະພາກສ່ວນທີ່ຮັບຜິດຊອບຕ້ອງປະເມີນຂໍ້ກຳນົດພ້ອມກັບແບບກວດສອບ ແລະ ຜູ້ສະໝັກຕ້ອງຄິດໄລ່ເປີເຊັ້ນສະເລ່ຍ. (ຍົກເວັ້ນພະນັກງານນຳທ່ຽວສະເພາະພື້ນທີ່)
- ແຕ່ລະປະເພດປະກອບມີ 22 ຕົວຊີ້ວັດ.
- ແຕ່ລະຕົວຊີ້ວັດຈະຖືກຕອບວ່າ **ຜ່ານ** ຫລື **ບໍ່ຜ່ານ.**

➢ *ເກນການໄລ່ຄະແນນສຳລັບ<u>ແຕ່ລະປະເພດ</u> ຕ້ອງໄດ້ຄະແນນບໍ່ໃຫ້ຫລຸດຄະແນນຕ່ຳສຸດຈຶ່ງຈະຜ່ານ.*

- *ຄະແນນຕ່ຳສຸດສຳລັບຜະລິດຕະພັນຊົນນະບົດແມ່ນ 50% (= 11 "ຜ່ານ")*
- *ຄະແນນຕ່ຳສຸດສຳລັບຜະລິດຕະພັນໃນເມືອງແມ່ນ 60% (=13 "ຜ່ານ")*

2. **ໃຫ້ຜູ້ສະໝັກໝາຍ ✓ ໃສ່ຫ້ອງ "ບໍ່ຜ່ານ" ຖ້າຫາກຍັງສົງໃສ ຫລື ຍັງບໍ່ໄດ້ຕາມຕົວຊີ້ວັດ.**

ຈົ່ງຈື່ໄວ້ວ່າຂັ້ນຕອນທີ 3 ຂອງການເລືອກ, ຜູ້ປະເມີນຜົນລະດັບຊາດອາດປະເມີນຜະລິດຕະພັນຂອງທ່ານຢູ່ທີ່ພາກສະໜາມ (ຕົວຈິງ). ຖ້າໃບຄຳຮ້ອງແຕກຕ່າງຈາກແບບຟອມຂອງຜູ້ປະເມີນຜົນລະດັບຊາດຫລາຍ (ຢ່າງໜ້ອຍຕ້ອງໄດ້ 30%), ສິ່ງນີ້ຈະບໍ່ລວມໃນໃບຄຳຮ້ອງແບບອັດຕະໂນມັດ.

3. ຜູ້ສະໝັກສາມາດສົ່ງຮູບພາບເພື່ອດັດແກ້ໃຫ້ສອດຄ່ອງກັບມາດຕະຖານອາຊຽນ.

ເຖິງແນວໃດກໍ່ຕາມ, ຜູ້ສະໝັກຕ້ອງຮັບປະກັນໃຫ້ສິ່ງອຳນວຍຄວາມສະດວກ ແລະ ການບໍລິການຕ່າງໆ ມີສະພາບທີ່ດີ ເພື່ອປະຕິບັດຕາມການປະເມີນຜົນມາດຖານຕ່ຳສຸດ.

ຜູ້ສະໝັກສາມາດຕື່ມໃສ່ຕາຕະລາງສັງລວມລະບົບນັບຄະແນນເພື່ອໃຫ້ຮູ້ການນັບຄະແນນຄັ້ງຫລ້າສຸດ

V. ແບບຟອມສະໝັກລາງວັນການທ່ອງທ່ຽວອາຊຽນ

ທີມຜູ້ສະໝັກຕ້ອງຮ່ວມກັນຂຽນໃບສະໝັກ ແລ້ວສົ່ງໃຫ້ພາກສ່ວນທີ່ຮັບຜິດຊອບຂອງແຂວງ ຫຼື ສູນກາງ, ໃນນີ້, ຈະມີຫົວໜ້າທີມອາດຈະແມ່ນພາກລັດ ຫຼື ພາກທຸລະກິດກໍໄດ້ ຂຶ້ນຢູ່ກັບທ່າແຮງ ແລະ ການຕົກລົງຂອງທີມຜູ້ສະໝັກ. ແບບຟອມສຳລັບການສະໝັກ ມີຢູ່ 3 ແບບຟອມຄື:

1. ແບບຟອມສຳລັບຂຽນຂໍ້ມູນ ແລະ ທ່າແຮງຂອງຜະລິດຕະພັນ,
2. ແບບຟອມສຳລັບຫົວໜ້າທີມຜູ້ສະໝັກ
3. ແບບຟອມສຳລັບພາກສ່ວນກ່ຽວຂ້ອງ (ສະມາຊິກທີມຜູ້ສະໝັກ) ລາຍລະອຽດມີດັ່ງລຸ່ມນີ້:

ໃບສະໝັກ ສຳລັບຂະແໜງທ່ອງທ່ຽວຂອງປະເທດສະມາຊິກອາຊຽນເທົ່ານັ້ນ												
ວັນທີຮ້ອງຂໍ											**ແບບຄຳຮ້ອງ** **(ຈົ່ງເລືອກເອົາຢ່າງດຽວ)**	
ວັນທີຮ້ອງຂໍ:			/			/	2	0			**ສົ່ງທາງໄປສະນີ**	❑
ເວລາຮ້ອງຂໍ								:				
ຕິດສະແຕມໄປສະນີ:			/			/	2	0			**ສົ່ງທາງອີເລັກໂທຣນິກ**	❑
											ສົ່ງດ້ວຍຕົນເອງ	❑ *ຖ້າສົ່ງດ້ວຍຕົນເອງ, ຈົ່ງສຳເນົາໜ້ານີ້ໄວ້ ແລະ ຜູ້ສະໝັກເກັບໄວ້ເປັນຫລັກຖານໃນການສະໝັກ*
ເລກທີໃບສະໝັກ:												

ແບບຟອມສະໝັກຜະລິດຕະພັນ - ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ

ປີຂໍສະໝັກ*:

[ຈົ່ງລະບຸປີຂໍສະໝັກລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ]

ຫົວຂໍ້ຂອງການຂໍສະໝັກ*:

[ຈົ່ງລະບຸຫົວຂໍ້ຂອງປີນັ້ນ] **ພາສາທີ່ໃຊ້ຂຽນໃສ່ໃບຄຳຮ້ອງ*:** *[ຈົ່ງລະບຸພາສາທີ່ຂຽນໃສ່ໃບຄຳຮ້ອງ]*

1. ລາຍລະອຽດຂອງຜະລິດຕະພັນ

1.1 ການນຳສະເໜີຜະລິດຕະພັນ

1.1.1. ຂໍ້ມູນທົ່ວໄປ

ຊື່ຜະລິດຕະພັນ*:	
ທີ່ຕັ້ງຂອງຜະລິດຕະພັນ *	*[ເວົ້າເຖິງທີ່ຕັ້ງດ້ານພູມມີສາດ]*

ລາຍລະອຽດຂອງຜະລິດຕະພັນ*	*[ເວົ້າເຖິງລາຍການທ່ອງທ່ຽວໃນແຕ່ລະມື້ ແລະ ການບໍລິການທີ່ສະໜອງໃຫ້ນັກທ່ອງທ່ຽວ]*

ກິດຈະກຳຕົ້ນຕໍທີ່ກ່ຽວຂ້ອງກັບຫົວຂໍ້ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນ ຂອງປີນັ້ນ*	*[ເວົ້າເຖິງກິດຈະກຳທີ່ເປັນຜະລິດຕະພັນ, ຖ້າມີຫລາຍກິດຈະກຳ, ຈົ່ງເນັ້ນໃສ່ກິດຈະກຳທີ່ນັກທ່ອງທ່ຽວຈະໃຊ້ເວລາຫລາຍທີ່ສຸດ. ກິດຈະກຳຕົ້ນຕໍນີ້ຕ້ອງກ່ຽວຂ້ອງກັບຫົວຂໍ້ຂອງປີນັ້ນ]*

ຜະລິດຕະພັນທີ່ນຳສະເໜີນັ້ນຖືກຕ້ອງ ແລະ ສອດຄ່ອງກັບລະບຽບ ແລະ ກົດໝາຍຂອງປະເທດຂອງຕົນ ແລະ ອາຊຽນ ກ່ຽວກັບກິດຈະກຳຂອງຄົນ ແລະ ສັດທີ່ຜິດກົດໝາຍ *	ແມ່ນ ❑	ບໍ່ແມ່ນ ❑

1.1.2. ປະເພດຜະລິດຕະພັນ

ປະເພດ*	**❑ ຜະລິດຕະພັນຊຸມຊົນບົດ** **❑ ຜະລິດຕະພັນຕົວເມືອງ**
<u>ສຳລັບຜະລິດຕະພັນຊຸມຊົນບົດເທົ່ານັ້ນ</u> ທີ່ຕັ້ງຂອງກິດຈະກຳຕົ້ນຕໍຂອງຜະລິດຕະພັນຕ້ອງໄດ້ 3 ໃນ 4 ມາດຕະຖານຂອງຜະລິດຕະພັນຊຸມຊົນບົດບໍ? *[ຈົ່ງກວດເບິ່ງມາດຕະຖານທີ່ສອດຄ່ອງກັບຜະລິດຕະພັນຂອງທ່ານ]*	❑ ຢູ່ນອກເມືອງ ❑ ຫ່າງຈາກທີ່ພັກອາໃສທີ່ມີປະຊາກອນຫລາຍກ່ວາ **10,000** ຄົນ ຊຶ່ງເປັນເຂດທີ່ມີທີ່ພັກອາໃສໜ້ອຍ ແລະ ປະຊາກອນໜ້ອຍ ❑ ພື້ນທີ່ທີ່ມີທົ່ງນາ, ສວນ, ຜືດພັນ ແລະ ເດີນເປົ່າຫວ່າງ ❑ ສ່ວນຫລາຍມີເຮືອນພັກແຂວນນຳປະຊາຊົນ ແລະ ມີການສະໜອງຫ້ອງນອນ ແລະ ອາຫານເຊົ້າ **B&B** ໃຫ້ແກ່ນັກທ່ອງທ່ຽວ
<u>ສຳລັບຜະລິດຕະພັນໃນເມືອງເທົ່ານັ້ນ</u> ທີ່ຕັ້ງຂອງກິດຈະກຳຕົ້ນຕໍຂອງຜະລິດຕະພັນ	❑ ທີ່ຕັ້ງໃກ້ກັບສະຖານີຂົນສົ່ງສາທາລະນະ ❑ ມີທີ່ພັກອາໃສ ແລະ ປະຊາກອນໜາແໜ້ນ ແລະ ພື້ນຖານໂຄງລ້າງ

ຕ້ອງໄດ້ 3 ໃນ 4 ມາດຖານຂອງຜະລິດຕະພັນໃນເມືອງບໍ? *[ຈົ່ງກວດເບິ່ງມາດຖານທີ່ສອດຄ່ອງກັບຜະລິດຕະພັນຂອງທ່ານ]*	ດ້ານສະພາບແວັດລ້ອມທີ່ມີການກໍ່ສ້າງ ❑ ມີໂຮງແຮມຫລາຍກ່ວາ ຫ້າ (5) ແຫ່ງ ❑ ຜະລິດຕະພັນ ຫລື ກິດຈະກຳຕົ້ນຕໍຫ່າງຈາກທີ່ຢູ່ອາໃສບໍ່ເກີນ 1 ຊົ່ວໂມງສຳລັບການຂີ່ລົດ

1.1.3. ທີມຜູ້ສະໜັກຂອງຜະລິດຕະພັນ

ຈຳນວນສະຖານທີ່ທີ່ກ່ຽວຂ້ອງກັບຜະລິດຕະພັນ:* *[ລວມທັງຜູ້ສະໜັກຫລັກ ຫຼື ຫົວໜ້າທີມສະໜັກ]*	
ຈຳນວນສະຖານທີ່ຂອງພາກລັດ:*	
ທີ່ຢູ່ທັງໝົດຂອງສະຖານທີ່ເຫລົ່ານີ້:*	

ຢ່າງໜ້ອຍຕ້ອງມີສະຖານທີ່ໜຶ່ງແຫ່ງທີ່ໄດ້ຮັບຮອງໃນລະດັບພາກພື້ນ, ລະດັບຊາດ ຫລື ລະດັບສາກົນພາຍໃນສີ່ປີກ່ອນມີການປະເມີນສຳລັບລາງວັນການທ່ອງທ່ຽວແບບຍືນຍົງອາຊຽນບໍ?*		❑ ມີ ❑ ບໍ່ມີ
ຊື່ສະຖານທີ່*:	**ຊື່ຂອງການຮັບຮອງ*:**	**ປີຍັ້ງຍືນ*:**

[ທ່ານສາມາດເພີ່ມຕາຕະລາງໃສ່ອີກຖ້າຈຳເປັນ]

1.1.4. ການເຮັດໃຫ້ຜະລິດຕະພັນກາຍເປັນເສດຖະກິດ

ຜະລິດຕະພັນນີ້ສ້າງລາຍຮັບໄດ້ຄົນປານໃດ ?*	
ນັກທ່ອງທ່ຽວຈອງຜະລິດຕະພັນນີ້ໄດ້ແນວໃດ ?*	
ລາຄາເທົ່າໃດ ?*	

1.2 ການຮ່ວມມື - ການຄຸ້ມຄອງຜະລິດຕະພັນ

1.2.1. ການພັກແຮມຄ້າງຄືນ	
ມີການພັກແຮມຄ້າງຄືນຈາກຜະລິດຕະພັນນັ້ນຫລາຍປານໃດ?*	
ຊື່ພາກສ່ວນທີ່ຮັບຜິດຊອບການພັກແຮມຄ້າງຄືນ:*	

1.2.2. ອາຫານ ແລະ ເຄື່ອງດື່ມທ້ອງຖິ່ນ	
ມີການບໍລິການອາຫານ ແລະ ເຄື່ອງດື່ມທ້ອງຖິ່ນຈັກຢ່າງ?*	
ຊື່ພາກສ່ວນທີ່ຮັບຜິດຊອບການບໍລິການອາຫານ ແລະ ເຄື່ອງດື່ມທ້ອງຖິ່ນ:*	

1.2.3. ກິດຈະກຳທີ່ຊຸມຊົນທ້ອງຖິ່ນມີສ່ວນຮ່ວມ	
ມີກິດຈະກຳທີ່ຊຸມຊົນທ້ອງຖິ່ນມີສ່ວນຮ່ວມຈັກກິດຈະກຳ?*	
ຊື່ພາກສ່ວນທີ່ຮັບຜິດຊອບກິດຈະກຳທີ່ຊຸມຊົນທ້ອງຖິ່ນມີສ່ວນຮ່ວມ:*	

1.2.4. ພະນັກງານນຳທ່ຽວທ້ອງຖິ່ນ	
ມີພະນັກງານນຳທ່ຽວທ້ອງຖິ່ນທີ່ມີສ່ວນຮ່ວມໃນຜະລິດຕະພັນນັ້ນຈັກຄົນ?*	
ບົດບາດຂອງພະນັກງານນຳທ່ຽວໃນຜະລິດຕະພັນນັ້ນມີຫຍັງແດ່?*	
ຊື່ພະນັກງານນຳທ່ຽວທີ່ມີສ່ວນຮ່ວມໃນຜະລິດຕະພັນນັ້ນ* ຫລື ຊື່ພາກສ່ວນທີ່ຮັບຜິດຊອບພະນັກງານນຳທ່ຽວທ້ອງຖິ່ນ*	

1.2.5. ຫ້ອງນ້ຳ	
ມີຫ້ອງນ້ຳສ່ວນບຸກຄົນ ຫລື ຫ້ອງນ້ຳສາທາລະນະຈັກແຫ່ງທີ່ນັກທ່ອງທ່ຽວສາມາດໃຊ້ໂດຍບໍ່ເສຍຄ່າ ແລະ ໄດ້ນຳໃຊ້ຢ່າງສະດວກໃນຂະນະທີ່ທ່ອງທ່ຽວຢູ່ນັ້ນ?*	
ຊື່ພາກສ່ວນທີ່ຮັບຜິດຊອບຫ້ອງນ້ຳ:*	

1.2.6. ການຂົນສົ່ງຢູ່ທ້ອງຖິ່ນ	
ການຂົນສົ່ງຢູ່ທ້ອງຖິ່ນມີການຈັດແຈງແບບໃດ?*	*[ບໍ່ຈຳເປັນສຳລັບຜະລິດຕະພັນທີ່ກ່ຽວກັບການຍ່າງ 100%]*
ຊື່ພາກສ່ວນທີ່ຮັບຜິດຊອບການຂົນສົ່ງຢູ່ທ້ອງຖິ່ນ:*	*[ບໍ່ຈຳເປັນສຳລັບຜະລິດຕະພັນທີ່ກ່ຽວກັບການຍ່າງ 100%]*

1.2.7. ພາກລັດ	
ມີພາກລັດທີ່ກ່ຽວຂ້ອງກັບຜະລິດຕະພັນນັ້ນຈັກພາກສ່ວນ?*	
ຊື່ພາກລັດ:*	
ບົດບາດຂອງພາກລັດທີ່ກ່ຽວຂ້ອງກັບຜະລິດຕະພັນນັ້ນມີຫຍັງແດ່?*	
1.2.8. ການຫັນເປັນທຸລະກິດ	
ຜະລິດຕະພັນນັ້ນສ້າງລາຍຮັບໄດ້ແນວໃດ?*	
ຊື່ພາກສ່ວນທີ່ຮັບຜິດຊອບໃນການສ້າງລາຍຮັບ:*	
1.2.9. ການບໍລິການເພີ່ມຕື່ມ	
ມີການນຳສະເໜີການບໍລິການອື່ນບໍ່ໃນຜະລິດຕະພັນນັ້ນ? ຖ້າມີ, ຈົ່ງລະບຸ	
ຊື່ພາກສ່ວນທີ່ຮັບຜິດຊອບການບໍລິການເພີ່ມຕື່ມ:	

2. ພາບລວມຂອງທີມຜູ້ສະໜັກ

2.1 ຫົວໜ້າທີມຜູ້ສະໜັກ

ສະຖານະພາບ	
ປະເພດ*	❑ ນິຕິບຸກຄົນ ❑ ບຸກຄົນທົ່ວໄປ[4]
ພາກລັດ/ພາກທຸລະກິດ**	❑ ພາກລັດ ❑ ພາກທຸລະກິດ
ຊື່ທາງການຂອງອົງກອນເປັນພາສາປະຈຳຊາດຂອງຕົນ	
ຊື່ທາງການຂອງອົງກອນເປັນພາສາອັງກິດ**	
ສະຖານະພາບທາງກົດໝາຍ**	❑ ວິສາຫະກິດ ❑ ສະມາຄົມ ❑ ໜ່ວຍງານພາກລັດ ❑ ອື່ນໆ (ຈົ່ງລະບຸ)
ທີ່ຢູ່ທາງໄປສະນີ	
ຊື ແລະ ເລກທີຖະໜົນ *	

ລະຫັດໄປສະນີ	
ບ້ານ/ເມືອງ/ແຂວງ*	
ຊື່ປະເທດ*	
ເວັບໄຊ/ຊື່ເຄື່ອຂ່າຍອອນລາຍ	

ຕົວແທນທາງກົດໝາຍ	
ນາມມະຍົດ (ທ້າວ, ນາງ)*	
ນາມສະກຸນ *	
ຊື່ແທ້*	
ໜ້າທີ່*	
ເບີໂທລະສັບ*	
ອີເມລ	
ຜູ້ຕິດຕໍ່ສຳລັບການສະເໜີ (ຜູ້ປະສານງານ)**	
ນາມມະຍົດ (ທ້າວ, ນາງ)*	
ນາມສະກຸນ *	
ຊື່ແທ້*	
ໜ້າທີ່*	
ເບີໂທລະສັບ*	
ອີເມລ	

2.2. ພາກສ່ວນທີ່ກ່ຽວຂ້ອງ (ສະມາຊິກໃນທີມ)

[ນິຕິບຸກຄົນ ແລະ ບຸກຄົນທົ່ວໄປກະລຸນາຕື່ມໃສ່ຕາຕະລາງຂ້າງລຸ່ມນີ້, ທ່ານສາມາດເພີ່ມຕາຕະລາງໃສ່ອີກຖ້າຈຳເປັນ]

ພາກສ່ວນທີ່ກ່ຽວຂ້ອງທີ 1

ສະຖານະພາບ	
ປະເພດ*	❑ ນິຕິບຸກຄົນ ❑ ບຸກຄົນທົ່ວໄປ[5]
ພາກລັດ/ພາກທຸລະກິດ**	❑ ພາກລັດ ❑ ພາກທຸລະກິດ
ຊື່ທາງການຂອງພາກສ່ວນທີ່ກ່ຽວຂ້ອງເປັນພາສາປະຈຳຊາດຂອງຕົນ	
ຊື່ທາງການຂອງພາກສ່ວນທີ່ກ່ຽວຂ້ອງເປັນພາສາອັງກິດ**	
ສະຖານະພາບທາງກົດໝາຍ**	❑ ວິສາຫະກິດ ❑ ສະມາຄົມ ❑ ໜ່ວຍງານພາກລັດ

	❑ ອື່ນໆ (ຈົ່ງລະບຸ)
ທີ່ຢູ່ທາງໄປສະນີ	
ຊື່ ແລະ ເລກທີຖະໜົນ *	
ລະຫັດໄປສະນີ	
ບ້ານ/ເມືອງ/ແຂວງ*	
ຊື່ປະເທດ*	
ເວັບໄຊ/ຊື່ເຄື່ອຂ່າຍອອນລາຍ	
ຕົວແທນດ້ານກົດໝາຍ	
ນາມມະຍົດ (ທ້າວ, ນາງ)*	
ນາມສະກຸນ *	
ຊື່ແທ້*	
ໜ້າທີ່*	
ເບີໂທລະສັບ*	
ອີເມລ	
ຜູ້ຕິດຕໍ່ (ຜູ້ປະສານງານ) ** **ຂອງການສະເໜີນັ້ນ**	
ນາມມະຍົດ (ທ້າວ, ນາງ)*	
ນາມສະກຸນ *	
ຊື່ແທ້*	
ໜ້າທີ່*	
ເບີໂທລະສັບ*	
ອີເມລ	

VI. ແບບຟອມສຳລັບປະເມີນຕົນເອງ ແລະ ຂອງຄະນະກຳມະການລົງປະເມີນຄືນ

1. ການກວດສອບທາງດ້ານບໍລິການ ແລະ ວິຊາການ (ສຳລັບຄະນະກຳມະການຂັ້ນແຂວງ ແລະ ສູນກາງ) "ໄດ້ຕາມມາດຕະຖານ" ການຄັດເລືອກຜະລິດຕະພັນ

1. ກວດສອບເອກະສານສະໝັກ (ແມ່ນ/ບໍ່ແມ່ນ)	
a) ໃບສະໝັກຕ້ອງສົ່ງຕາມກຳນົດເວລາທີ່ກຳນົດໄວ້	❑ ແມ່ນ ❑ບໍ່ແມ່ນ
b) ໃບສະໝັກຕ້ອງເປັນໄປຕາມຮູບແບບທີ່ຄະນະກຳມະການກຳນົດໄວ້	❑ ແມ່ນ ❑ບໍ່ແມ່ນ

c) ໃບສະໝັກຕ້ອງຂຽນເປັນພາສາລາວ	❑ ແມ່ນ ❑ບໍ່ແມ່ນ
2. ຜ່ານຕາມມາດຕະຖານ (ແມ່ນ/ບໍ່ແມ່ນ)	
a) ໃບສະໝັກຕ້ອງສອດຄ່ອງກັບລະບຽບ ແລະ ນະໂຍບາຍຂອງອາຊຽນທີ່ວາງອອກ	❑ ແມ່ນ ❑ບໍ່ແມ່ນ
b) ຜູ້ສະໝັກຕ້ອງແມ່ນພົນລະເມືອງລາວ ຢູ່ໃນບັນດາປະເທດອາຊຽນ	❑ ແມ່ນ ❑ບໍ່ແມ່ນ
